

# ອະນຸສອນ ອັກຄະມະຫາບັນດິດ

(ຄົມຄຳສອນ - ຍອດກະວີຄຳກອນ)

ຈັດທຳໂດຍ: ສິດສານຸສິດ ຜູ້ມີຈິດສັດທາ ນ້ອມຖວາຍແດ່ອົງບິດາຈານ
ທ່ານ ພຣະຄຣູມະຫາພຸດທະວົງສາບໍຣິຊາຍານມຸນີມະຫາເຖຣະ
( ບໍຣິຊາ ສຸທັມມະໂກສານ )

ວັດເທພະນິມິດ ( ທາດຝຸ່ນ ) ນະຄອນຫຼວງວຽງຈັນ

໑໔-໑໕ - ກໍລະກົດ - ໒໐໐໐



ພຣະ ຄູຣມະຫາພຸດທະວົງສາ ປີຣຊາຍານມຸນີ

(ປຣີຊາສຸທັມມະໂກສານ)

ປະທານກິດຕິມະສັກ ທີ່ປຶກສາສູນກາງອົງການ

ພຸດທະສາສະໜາສຳພັນລາວ.

# ການສຶກສາ ແລະການເຄື່ອນໄຫວ

ຄ.ສ 1935 -38 ສອບໄດ້ນັກທັມຊັ້ນ ຕີ - ໂທ ທີ່ ສຳນັກຮຽນວັດ ວາລິນ ຊຳຣາບ ອຳເພີ ວາລິນ ຈັງຫວັດ ອຸບົນຣາຊະທານີ

ຄ.ສ.1939 ເຂົ້າພຳນັກ ຢູ່ຄະນະ ໜຶ່ງ ວັດມະຫັນນະພາຣາມບາງກອກ.

ຄ.ສ. 1940. ສອບໄດ້ນັກທັມ ຊັ້ນເອກ ທີ່ ວັດ ດັ່ງກ່າວ

ຄ.ສ. 1941. ສອບໄດ້ປະຮຽນ ທັມປະໂຫຍກ 3.

ຄ.ສ. 1942. ສອບໄດ້ປະຮຽນ ທັມປະໂຫຍກ 4.

ຄ.ສ. 1943. ສອບໄດ້ປະຮຽນ ປະໂຫຍກ 5.

ຄ.ສ. 1944. ສອບໄດ້ປະຮຽນ ປະໂຫຍກ 6.

ຄ.ສ. 1945. ຈຳພັນສາຢູ່ວັດທັມມະລັງສີ ບ້ານທ່ານແຮ່ ເມືອງມຸນລະປາໂມກ ແຂວງຈຳປາສັກ

ຄ.ສ 1946 ຈຳພັນສາຢູ່ວັດມີໄຊຍາຣາມ ນະຄອນຫລວງວຽງຈັນ

ຄ.ສ 1947 ເດີນທຸດົງໄປທາງພາກເຫນືອຂອງປະເທດໄທຄື: ຊຽງໃໝ່, ຊຽງລາຍ ແລະ ຈຳພັນສາຢູ່ທີ່ ວັດທາດດອຍສຸເທບ,ປະຕິບັດວິປັດສະນາກຳມະຖານ.

ຄ.ສ 1948 , ຈຳພັນສາທີ່ວັດຫມໍ້ຄຳຕວງ ຕຳບົນສີພູມ ອຳເພີເມືອງ ຈັງຫວັດຊຽງໃໝ່

ຄ.ສ 1949 - 52 ຈຳພັນສາຢູ່ວັດທັມມະລັງສີ ບ້ານທ່າແຮ່ ເມືອງມຸນລະປາໂມກ ແຂວງຈຳປາສັກ

ຄ.ສ 1953 ພັກຈຳພັນສາຢູ່ວັດມີໄຊຍາຣາມ ນະຄອນຫລວງວຽງຈັນ

ຄ.ສ 1954 ຈຳພັນສາຢູ່ວັດເທບນິມິດ ທາດຝຸ່ນ

ຄ.ສ 1969 ໄດ້ສ້ອມແປງ ແລະປຸຣະນະພຣະທາດ ພ້ອມດຽວກັນກໍໄດ້ປຸຣະນະປະຕິສັງຂອນ ກໍ່ສ້າງສາສະນາສະຖານພາຍໃນວັດໃຫ້ຈະເຣີນ

ຂຶ້ນອີກຫລາຍຢ່າງ

ຄ.ສ 1995 -98 ໄດ້ກໍ່ສ້າງຫໍສັນຕິນິມິດ ໂດຍສັດທາຂອງທ່ານປາສະການ ໂກເຢ ພ້ອມດ້ວຍພຸດທະສາສະນິກກະຊົນຊາວລາວ

## ການຕ່າງປະເທດ

ປີ ຄ.ສ 1957 ເປັນເລຂາຕິດຕາມອົງສົມເດັດສັງຄະນາຍົກ (ພຣະລູກແກ້ວຄູນ ມະນີວົງ )ໄປສະຫລອງສອງພັນຫ້າ (2500) ທີ່ປະເທດສະຫະພາບມຽນມາ

ປີ ຄ.ສ 1968 ຢ້ຽມຢາມສັນຖະວະໄມຕີ ທີ່ສະຫະພາບໂຊວຽດ

ປີ ຄ.ສ 1971 ໄປຮ່ວມກອງປະຊຸມ ABCP ທີ່ສະຫະພາບໂຊວຽດ

ປີ ຄ.ສ 1979 ໄປຢ້ຽມຢາມສາທາລະນະລັດ ສັງຄົມນິຍົມຫວຽດນາມ

ປີ ຄ.ສ 1982 ໄປຮ່ວມກອງປະຊຸມຊາວພຸດອາຊີ ເພື່ອສັນຕິພາບໂລກທີ່ປະເທດມົງໂກລີ

## ຫນ້າທີ່ຕໍາແຫນ່ງ

ປີ ຄ.ສ 1954 ເປັນເລຂາອົງການປົກຄອງສົງລາວ

ປີ ຄ.ສ 1954-75 ເປັນຮອງສົມເດັດສັງຄະນາຍົກວ່າການປົກຄອງສົງລາວ

ປີ ຄ.ສ 1975-82 ເປັນປະທານ ອ.ພ.ສ ກໍາແພງນະຄອນວຽງຈັນ

ປີ ຄ.ສ 1975-82 ເປັນຮອງປະທານ ອ.ພ.ສ ສູນກາງ

ປີ ຄ.ສ 1983-98 ເປັນຮອງປະທານກິດຕິມະສັກ ທີ່ປຶກສາ ອ.ພ.ສ ສູນກາງ

ປີ ຄ.ສ 1998 -ປັດຈຸບັນ ເປັນປະທານກິດຕິມະສັກ ທີ່ປຶກສາ ອ.ພ.ສ ສູນກາງ

# ຄຳນຳ

ເນື່ອງໃນສຸພາວະດີຖີມະຫາມິ່ງຄຸນຣັດຖະບານສະຫະພາບມຽນມາມອບອັກຄະມະຫາບັນດິດ ໃຫ້ແກ່ ພຣະຄຣູມະຫາພຸດທະວົງສາປຣິຊາຍານມຸນີສຸທັມມະໂກສານມະຫາເຖຣະ ປະທານກິດຕິມະສັກ ທີ່ປຶກສາສູນກາງອົງການພຸດທະສາສະໜາສຳພັນລາວ.

ເນື່ອງດ້ວຍອົງບິດາຈານ ເປັນຜູ້ເກື້ອກູນແກ່ຄົນທັງປວງ ຜູ້ມີບຸນມີໂອກາດ ໄດ້ຮູ້ຈັກກັບເພິ່ນຍ່ອມຮັບຮອງໄດ້ວ່າ: ຍ່ອມມີຄວາມເຄົາລົບສັດທາໃນຕົວຂອງເພິ່ນຢ່າງແຈບອີກແຈບໃຈ ດ້ວຍຮັບຮູ້ເຂົ້າໃຈໃນບຸນຄຸນຂອງເພິ່ນ, ແມ້ເວລານີ້ສິຣິມາຍຸຂອງອົງບິດາຈານຈະໃກ້ເກືອບ 90 ປີແລ້ວກໍຕາມແຕ່ອົງບິດາຈານ ເພິ່ນຍັງເກື້ອກູນແກ່ຄົນທັງປວງໄດ້ໂດຍບໍ່ຢຸດຢັ້ງ ດ້ວຍອຳນາດໃຈທີ່ຊົງໄວ້ເຊິ່ງທັມໝັ້ນຄົງເປັນໄປດັ່ງພຣະພຸດທະສາສະໜາສຸພາສິດທີ່ວ່າ **ສັບເພສັງ ສະຫິໂຕ ໂຫຕິ ສັທທັມເມສຸປະຕິດຖິໂຕ** ຜູ້ຕັ້ງໝັ້ນໃນສັດທັມເປັນຜູ້ເກື້ອກູນແກ່ຄົນທັງປວງ ອັນວ່າຄວາມເກື້ອກູນທີ່ເກີດໄດ້ແຕ່ໃຈທີ່ມີທັມມະໝັ້ນຄົງຈິງນັ້ນຍ່ອມໃຫ້ເກື້ອກູນຍັງຄວາມສະຫງົບສຸກແກ່ຈິດໃຈຂອງຜູ້ມີທັມກ່ອນໃຫ້ຄວາມເກື້ອກູນແກ່ຜູ້ຄົນທັງຫຼາຍ.

ດັ່ງນັ້ນມວນບຸດສິດທັງຫຼາຍຈິ່ງນ້ອມຖວາຍຄວາມເຄົາລົບສະແດງມຸທິຕາສັກກາຣະດ້ວຍການຈັດທຳອະນຸສອນ " ຄົມຄຳສອນ- ຍອດກະວີຄຳກອນ "

ຕາງໜ້າມວນບຸດສິດທັງຫຼາຍ

ວຽງຈັນ,7/7/ 2000

# ຄຳອະນຸໂມທະນາຄາຖາ

ຂອງອົງປະທານສູນກາງອົງການພຸດທະສາສະໜາສຳພັນລາວ.

( ພຣະ ມະຫາວິຈິດ ສິງຫະຣາຊ )

ເນື່ອງດ້ວຍໃນນາມພຣະເດດພຣະຄຸນ ເຈົ້າຄຸນອາຈານໄດ້ຮັບມອບອັກຄະມະຫາບັນດິດຈາກລັດຖະບານສະຫະພາບມຽນມາຄັ້ງນີ້ນັບໄດ້ວ່າເປັນກຽດປະຫວັດອັນສຳຄັນ ຂອງວົງການພຣະ ສົງລາວ ກໍ່ຄືພຣະພຸດທະສາດສະໜາ ແລະ ພຸດທະສາສະນິກະຊົນຕ່າງກໍ່ມີຄວາມປາບປື້ມປິຕິຍິນດີເປັນຢ່າງຍິ່ງ.

ພ້ອມດຽວກັນນີ້ສິດສານຸສິດຜູ້ມີກຸສົນເຈຕະນາສັດທາຕໍ່ພຣະເດດພຣະຄຸນເຈົ້າຄຸນອາຈານ ໄດ້ພ້ອມພຽງກັນຈັດທຳອະນຸສອນ ເພື່ອມອບຖວາຍໃຫ້ແກ່ຜູ້ມີພຣະຄຸນຄັ້ງນີ້ ກໍ່ນັບໄດ້ວ່າເປັນການສະແດງອອກເຊິ່ງກະຕັນຍູກະຕະເວທິຕາທັມ ແລະ ເພື່ອເປັນອະນຸສອນຈາລຶກກຽດຕິຄຸນໄວ້ໃຫ້ລູກຫລານໄດ້ສຶກສາຫາຄວາມຮູ້ ແລະ ເປັນຜົນປະໂຫຍດແກ່ສັງຄົມຕໍ່ໄປ.

ດັ່ງນັ້ນ ຂ້າພະເຈົ້າ ຈິ່ງຂໍອະນຸໂມທະນາໃນກຸສົນເຈດຕະນາອັນເປັນກຸສົນຄັ້ງນີ້ດ້ວຍ.

ວັດພຣະທາດຫລວງເໜືອ

ນະຄອນຫລວງວຽງຈັນ

7 ກໍລະກົດ 2000

ພຣະມະຫາວິຈິດ ສິງຫະຣາຊ

# ຄຳເຫັນຂອງພຣະອາຈານ ບຸນສີ ວົງພູມີ
# ຫົວໜ້າຫ້ອງການ, ເລຂາປະທານສູນກາງອົງການ
# ພຸດທະສາດສະໜາສຳພັນລາວ

---

ພຣະອາຈານໃຫຍ່ມະຫາປຣີຊາສຸທັມມະໂກສານ ເປັນພຣະມະຫາເຖຣະທີ່ມີບົດບາດສຳຄັນ ຕໍ່ປະເທດຊາດບ້ານເມືອງ. ເນື່ອງດ້ວຍໃນວາຣະທີ່ເພິ່ນໄດ້ຮັບອັກຄະມະຫາບັນດິດຈາກປະເທດສະຫະພາບມຽນມາຄັ້ງນີ້ກໍ່ນັບໄດ້ວ່າເປັນກຽດປະຫວັດທີ່ຕ້ອງຈາຣຶກໄວ້ໃນໜ້າປະຫວັດສາດຂອງວົງການພຣະສົງລາວ.

ໃນນາມສິດສານຸສິດ ມີຄວາມຄິດເປັນເອກະສັນກັນຈັດທຳອະນຸສອນ ເພື່ອມອບຖວາຍ ແລະ ປະກາດກຽດຕິຄຸນຂອງເພິ່ນໃຫ້ຖືກຈາຣຶກບັນທຶກໄວ້ ເພື່ອໃຫ້ກຸນລະບຸດໄດ້ສຶກສາຫາຄວາມຮູ້ຄັ້ງນີ້ກໍ່ນັບໄດ້ວ່າເປັນການສະແດງອອກ ເຊິ່ງຄວາມກະຕັນຍູບູຊາຄຸນຜູ້ມີພຣະຄຸນ. ເຫັນວ່າການກະທຳນີ້ສົມຄວນຈະໄດ້ຮັບຄວາມຊົມເຊີຍອະນຸໂມທະນາເປັນຢ່າງຍິ່ງ.

ວັດພຣະທາດຫລວງເໜືອ

ນະຄອນວຽງຈັນ, ວັນທີ 07/07/2000.

ພຣະ ອາຈານ ບຸນສີ ວົງພູມີ.



ພຣະ ຊາຍຄຳ ຈຳປາອຸທຸມ

ຜູ້ດຳເນີນງານ ສິດວັດເທພະນິມິດ

ກຳລັງສຶກສາປຣິນຍາໂທ ພຣະພຸດທະສາສະໜາ

ຫລັກສູດນານາຊາດ.



ພຣະ ມະຫາບຸນທະວີ ວິໄລຈັກຣ໌

ພະນັກງານປະຈຳຫ້ອງການສູນກາງ ອ.ພ.ສ

ຜູ້ດຳເນີນງານ

ນ້ອມຄາຣະວະສັກກາຣະມຸທິຕາແກ່ອົງບິດາຈານ
ພຣະຄຣູມະຫາພຸດທະວົງສາປຣິຊາຍານມຸນີ ສຸທັມມະໂກສານ
ອົງປະທານກິຕິມະສັກທີ່ປຶກສາສູນກາງອົງການພຸດທະສາສະໜາ
ສຳພັນລາວ.

ທ່ານພຣະຄຣູມະຫາພຸດທະວົງສາປຣິຊາເປັນພຣະມະຫາເຖຣະຜູ້ໃຫ່ຍຣູບໜຶ່ງທີ່ມີຄວາມສຳຄັນໃນປະເທດລາວ ໄດ້ບຳເພັນສິ່ງທີ່ເປັນປະໂຫຍດ ນອກຈາກໃຫ້ບັງເກີດແກ່ອົງທ່ານເອງແລ້ວ ຍັງເປັນປະໂຫຍດແກ່ວັດ ຕະຫລອດເຖິງໃນຈຸດນະທີ່ທ່ານ ເປັນພິກສຸພຸດທະສາວົກ ໃນພຣະທັມມະວິໄນ ເພິ່ນເປັນຜູ້ທີ່ມີສິ່ງໜຶ່ງເຊິ່ງຮູ້ກັນທົ່ວໄປວ່າ ມຸງຄຸນຄືເຫດທີ່ຈະຕັ້ງຕົນໃຫ້ຈະເຣີນຂຶ້ນຢູ່ພາຍໃນ ມຸງຄຸນດັ່ງກ່າວນີ້ໝາຍເຖິງມົງຄຸນທີ່ອົງສົມເດັດພຣະສັມມາສັມພຸດທະເຈົ້າ ໄດ້ຊົງສະແດງໄວ້ ກ່າວທີ່ເປັນຫລັກກໍຄື ທີ່ຊົງສະແດງໄວ້ໃນມົງຄຸນມະສູດເປັນສ່ວນພຸດທະພາສິດຄວນຈະນຳມາກ່າວໄວ້ໃນທີ່ນີ້ເພື່ອໃຫ້ເປັນສັກຂີພະຍານພຽງສອງປະການຄື:

1. **ປຸບເພກະຕະປຸນຍະຕາ** ຄວາມເປັນຜູ້ມີບຸນໄດ້ກະທຳໄວ້ແລ້ວໃນຊາດປາງກ່ອນ.
2. **ອັດຕະສັມມາປະນິທິຕາ** ການຕັ້ງຕົນໄວ້ຖືກຕ້ອງ.

ມຸງຄຸນທັງສອງປະການນີ້ ຖືວ່າເປັນມຸງຄຸນທີ່ມີຢູ່ພາຍໃນ ຄວາມຈິງຍັງຈະຕ້ອງມີມຸງຄຸນເປັນສ່ວນປະກອບພາຍນອກອີກປະການໜຶ່ງຄື **ປະຕິຣູປະເທສະວາດ ຄື** ການຢູ່ໃນຖິ່ນທີ່ເໝາະສົມ ໃນການປະກອບກຳລະນີຍະກິດນັ້ນໆ.

ອົງບິດາຈານທີ່ເຄົາຣົບຂອງພວກເຮົາເພິ່ນກໍມີຊາດພູມຢູ່ໃນເຂດແຂວງດິນແດນພາກໃຕ້ ດິນແດນທີ່ລືນາມຂອງນັກປຣາດ, ຜູ້ກ້າຜູ້ສ້າງວີຣະກຳການຕໍ່ສູ້ທີ່ເອົາເລືອດແລກດ້ວຍເລືອດ ເພື່ອປົກປ້ອງປິຕິພູມ. ເພິ່ນເປັນຜູ້ຄົງແກ່ຮຽນ ປະຮຽນທັມທີກປະໂຫຍກນັກທັມເອກ ໄດ້ສ້າງຊື່ສຽງໃຫ້ແກ່ວົງການພຣະນັກສຶກສາສົງລາວໃນຕ່າງປະເທດມາແລ້ວ. ເພິ່ນພໍອົກພໍໃຈກັບການຮຽນແຕ່ພຽງປະໂຫຍກທີກ. ເພິ່ນຕ້ອງການຊອກສະແຫວງຫາແກ່ນສານສາຣະໃຫ້ກັບຊີວິດດ້ວຍການມຸ້ງປະຕິບັດທັມ, ເດີນທາງຈາກກຸງເທບ ມຸ້ງສູ່ຊຽງໃໝ່. ເພິ່ນໄດ້ຕັ້ງສັດຈະຍາທິຖານຈິດອຸທິດຕົນຕໍ່ຮົ່ມຜ້າກາສາວະພັດດ້ວຍສັດທາອັນແຮງກ້າ. ເພິ່ນກັບຄືນປິຕຸພູມຄືປະເທດລາວ ອັນເປັນດິນແດນບັນພຣະບຸລຸດໄດ້ມອບໄວ້ໃຫ້ແກ່ລູກລາວຫລານລາວ. ດ້ວຍຄວາມຕັ້ງໃຈຈິງເພື່ອຈະສ້າງຕົນໃຫ້ມີວິທະຍາຖານະພ້ອມກັບສືບຕໍ່ອາຍຸພຣະພຸດທະສາສະໜາສົມເປັນພຸດທະບຸດ ນີ້ເປັນປະການແລກ. ຄວາມເປັນຜູ້ມີບຸນໄດ້ກະທຳໄວ້ແລ້ວໃນຊາດປາງກ່ອນນັ້ນຕ້ອງນັບໄດ້ວ່າເປັນຕົ້ນທຶນອັນສຳຄັນຂອງຄົນ ບໍ່ແມ່ນແຕ່ອົງບິດາຈານຂອງເຮົາເທົ່ານັ້ນ. ຄົນທຸກຄົນທີ່ໄດ້ເກີດມາເປັນມະນຸດຫຼືເປັນຄົນໄດ້ນັ້ນກໍເພາະບຸນເປັນຜູ້ນຳໃຫ້ມາເກີດ ແລະ ບຸນທີ່ຈະນຳໃຫ້ມາເກີດນັ້ນກໍຕ້ອງເປັນບຸນທີ່ຕົນກະທຳໄວ້ເປັນຕົ້ນທຶນ ຫຼືເດີມພັນຫຼື ເອີ້ນວ່າບຸນເກົ່າແຕ່ປາງກ່ອນ. ແຕ່ບຸນທີ່ບຸກຄົນໄດ້ກະທຳໄວ້ແລ້ວນັ້ນ ແມ້ຈະນຳສັດໃຫ້ມາເກີດເປັນມະນຸດ ເປັນຄົນເໝືອນກັນກໍ່ຕາມ ສ່ວນບຸນນັ້ນບໍ່ເໝືອນກັນ ແລະ ເທົ່າກັນແນ່ນອນ ອາດຈະມີຫຼາຍນ້ອຍ ຄວາມແຕກຕ່າງກັນແຫ່ງບຸນ ເປັນຕົວນຳໃຫ້ບຸກຄົນມາເກີດເປັນມະນຸດນີ້ ມີຈຳນວນບໍ່ເທົ່າກັນ ຈຶ່ງແບ່ງໃຫ້ບຸກຄົນມີຄວາມສຸກຄວາມຈະເຣີນ ຫຼືຄວາມມັ່ງຄັ່ງສົມບູນພູນສຸກບໍ່ເທົ່າກັນ ແຕກຕ່າງກັນອອກໄປ ບຸນນີ້ຍັງເປັນປັດໃຈອັນສຳຄັນປະການ

ໜຶ່ງທີ່ຈະເປັນຄຸນແຮງໜູນໃຫ້ບຸກຄົນມີມຸງຄຸນສືບຕໍ່ໄປ ຄື **ອັດຕະສັມມາປະນິທິຕາ** ການຕັ້ງຕົນໄວ້ຖືກຕ້ອງປະກອບຕົນໄວ້ໃນທາງທີ່ສົມຄວນນັ້ນ ຄືຈະເຣີ່ມຕົ້ນດ້ວຍການເວັ້ນຊົ່ວເປັນອັນດັບທຳອິດ ການປະພຶດປະຕິບັດໃຫ້ຖືກຕ້ອງເປັນອັນດັບທີ່ສອງ ການປະກອບຕົນໄວ້ໃນທາງທີ່ສົມຄວນເປັນອັນດັບທີ່ສາມ. ທັງສາມອັນດັບປະກອບຂຶ້ນເປັນອົງຄື **ອັດຕະສັມມາປະນິທິຕາ** ຄວາມຕັ້ງຕົນໄວ້ຖືກຕ້ອງ.

ອົງບິດາຈານຂອງເຮົາເພິ່ນມີມຸງຄຸນທີ່ເປັນຫຼັກພາຍໃນ 2 ປະການຄື:

➤ **ບຸບເພກະຕະປຸນຍະຕາ** ແລະ **ອັດຕະສັມມາປະນິທິຕາ** ແລະມີມຸງຄຸນພາຍນອກອີກປະການໜຶ່ງຄື **ປະຕິຣູປະເທສະວາດ** ການຢູ່ໃນປະເທດກໍຄືສະຖານທີ່ທີ່ສົມຄວນ ຈຶ່ງເປັນພະລະອະປັດໃຈທີ່ສົ່ງເສີມໃຫ້ເພິ່ນເປັນຜູ້ຈະເຣີນຮຸ່ງເຮືອງໃນທາງຝ່າຍພຸດທະຈັກ < ສາສະໜາຈັກ > ທັງໃນສົກສີຄືຄວາມເປັນພຣະມະຫາເຖຣະຂອງເພິ່ນ ແລະ ທັງໃນໜ້າທີ່ການປົກຄອງ < ຮອງສັງຄະນາຍົກ > ເປັນປະທານກິຕິມະສັກທີ່ປຶກສາ ອົງການສົງລາວ. ກ້າວໜ້າເປັນລຳດັບມາຈຶ່ງຈັດເປັນ ປູຊະນີຍະພິກສຸ ຜູ້ສົມຄວນແກ່ການບູຊາ ໄດ້ຕາມສາສະໜາໂວຫານ. ບັນດາທ່ານຜູ້ມາບູຊາບຸກຄົນຜູ້ຄວນແກ່ການບູຊາເຊັ່ນ ອົງບິດາຈານຂອງພວກເຮົານີ້ ນັບໄດ້ວ່າປະສົບພົບພໍ້ກັບສິ່ງທີ່ດີຫຼືຈະໄດ້ຮັບສິ່ງຕອບແທນອີກສິ່ງໜຶ່ງ ສິ່ງນັ້ນຄື ອຸດົມມຸງຄຸນ ທີ່ພຣະພຸດທະເຈົ້າໄດ້ຕັດໄວ້ ໃນມຸງຄຸນນະສູດນັ້ນເອງ ຕາມພຣະປາລີທີ່ວ່າ **ປູຊາຈະປູຊະນີຍານັງ ເອຕຳມັງ ຄະລະມຸດຕະມັງ** ແປໃຈຄວາມວ່າ ການບູຊາທ່ານ ຜູ້ຄວນບູຊາທັງຫຼາຍ ເປັນອຸດົມມຸງຄຸນ ດັ່ງນີ້.

ໃນຖານະຂ້າພຣະເຈົ້າເປັນສິດສານຸສິດຄົນໜຶ່ງຍາມໃດກໍຣຳລຶກນຶກເຖິງບຸນຄຸນຂອງຜູ້ມີພຣະຄຸນເຊັ່ນ ອົງບິດາຈານ ຢູ່ທຸກວັນເວລາ

ເນື່ອງດ້ວຍວາລະດິຖີອັນເປັນມະຫາມຸງຄຸນທີ່ອົງທ່ານໄດ້ຮັບການຖວາຍ " ອັກຄະມະຫາບັນດິດ " ຈາກລັດຖະບານປະເທດສະຫະພາບມຽນມາ ນັບໄດ້ວ່າເປັນກຽດ ແລະ ປະຫວັດກັບ ບູຊະນີຍະພິກສຸ ທີ່ທຸກຄົນຄວນ ໃຫ້ຄວາມສຳຄັນທວນຮຳລຶກຮ່ວມກັນໃນຄັ້ງນີ້ດ້ວຍ. ດັ່ງນັ້ນຂ້າພຣະເຈົ້າ ຈຶ່ງໄດ້ປຶກສາຫາເນື້ອຄວາມພ້ອມພຽງກັບໝູ່ຄະນະສິດສານຸສິດ ວ່າເຫັນ ສົມຄວນຈັດທຳໜັງສືເພື່ອເປັນທັກສິນານຸສອນຖວາຍແດ່ອົງບິດາຈານ ຜູ້ ມີບຸນຄຸນຕໍ່ຊາດສາສະໜາເຊັ່ນ ອົງບິດາຈານ. ເພື່ອປະກາດຍົກຍ້ອງບັນ ທຶກຈາລຶກເປັນລາຍລັກອັກສອນໃຫ້ເຊັ່ນລູກຫລານຜູ້ຕ້ອງການສຶກສາຫາ ຄວາມຮູ້ ຈະໄດ້ຮັບຮູ້ຕາມຄວາມເປັນຈິງ.

ດ້ວຍອຳນາດ ກຸສົນເຈຕະນາທັກສິນານຸປະທານໃນການສ້າງຄຸນ ງາມຄວາມດີຄັ້ງນີ້ ຂໍອ້າງເອົາຄຸນ ພຣະສີຣັດຕະນະໄຕພ້ອມດ້ວຍສິ່ງສັກ ສິດທັງຫຼາຍ ຈົ່ງມາຊ່ວຍດົນບັນດານອຳນວຍອິດຖະວິບູນມະນູນພູນຜົນ ແກ່ອົງບິດາຈານ ໃຫ້ໝັ້ນຍືນສະຖຽນສະຖາພອນຄົງເປັນນິດນິຣັນດອນ ຕະຫລອດໄປ.

ນ້ອມຄາຣະວະຖວາຍດ້ວຍຄວາມເຄົາຣົບເປັນຢ່າງສູງ

ພຣະຊາຍຄຳ ຈຳປາອຸທຸມ

# ການບັງເກີດຂຶ້ນຂອງມະນຸດ

ໂດຍ: ພຣະມະຫາບຸນທະວີ ວິໄລຈັກຣ໌

ນ້ອມຖວາຍແດ່ອົງບິດາຈານພຣະຄຣູມະຫາພຸດທະວົງສາປຣິຊາ ຍານມຸນີ.(ປຣິຊາ ສຸທັມມະໂກສານ)

**ການເກີດເປັນມະນຸດ** ເປັນການລຳບາກຍາກເຂັນ ຄົນເຮົາເກີດຂຶ້ນມາແລ້ວ ຖ້າມີອະໄວຍະວະຄົບ 32 ປະການແລ້ວນັບວ່າເປັນຜູ້ມີລາບອັນປະເສີດທີ່ສຸດແລ້ວ ເມື່ອຮູ້ແນວນັ້ນມະນຸດເຮົາທຸກຄົນ ຄວນເສາະສະແຫວງຫາຄຸນນະທຳ ໃຫ້ເກີດຂຶ້ນກັບຕົນໃຫ້ໄດ້ ພັດທະນາກາຍພັດທະນາຈິດໃຈຂອງຕົນໃຫ້ມີຄວາມຈະເຣີນໃນຊີວິດ ຄຸນນະທັມທີ່ຄວນໃຫ້ມີໃນຕົນນັ້ນ ພຣະສຳມາສຳພຸດທະເຈົ້າ ພຣະອົງໄດ້ຕັດໄວ້ໃນຈະຕຸກະນິບາດ ອັງຄຸຕຕະຣະນິກາຍ ປະກອບໄປດ້ວຍຫລັກ 4 ປະການໃຫຍ່ໆ ດັ່ງນີ້ຄື:

## 1. ຕ້ອງພົບກັບບັນດິດ

ຄຳວ່າ ບັນດິດນັ້ນ ຄືເປັນບຸກຄົນທີ່ມີ ຈິດໃຈຜ່ອງໃສ ເປັນປົກກະຕິເຫັນດີວ່າດີ ເຫັນຊົ່ວວ່າຊົ່ວ ເປັນຜູ້ມີເຫດຜົນ ຍຶດຖືຄ່ານິຍົມທີ່ຖືກຕ້ອງສາມາດດຳເນີນຊີວິດຂອງຕົນດ້ວຍສະຕິປັນຍາທີ່ຮຽນຮູ້ເຮົາຄວນພົບເຮົາຄວນສົນທະນາກັບທ່ານໃຫ້ເຂົ້າໃຈ ເພື່ອນຳຄວາມຮູ້ຈາກທ່ານໄປໃຊ້ ໃນຊີວິດປະຈຳວັນ

## 2. ຕ້ອງຟັງຄຳຂອງທ່ານ

ບັນດິດແຕ່ລະຄົນຈະສອນໃຫ້ເຮົາຄິດດີ ຄື ຄິດໃຫ້ທານ ຄິດໃຫ້ອະໄພ ຢູ່ສະເໝີ ສອນໃຫ້ຄິດຖືກຕ້ອງຕາມຄວາມເປັນຈິງເຫັນວ່າບາບມີ

ຈິງ ບຸນມີຈິງ ເຮັດຄວາມດີ ຍ່ອມໄດ້ຮັບຜົນດີຕອບ ເຮັດຄວາມຊົ່ວຍ່ອມໄດ້ຮັບຜົນຊົ່ວຕອບ ຖ້າເວົ້າອັນໃດ ກໍ່ເວົ້າແຕ່ຄວາມຈິງ ເວົ້າແຕ່ຄວາມສາມັກຄີ ເວົ້າແຕ່ເລື່ອງມີປະໂຫຍດ ເວົ້າດ້ວຍຈິດໃຈທີ່ມີເມຕາ ເວົ້າຖືກກາລະເທສະ ເວົ້າອອກມາຄວາມໃດກໍ່ເປັນເລື້ອງທີ່ເກີດປະໂຫຍດກັບສັງຄົມ ແລະ ປະເທດຊາດບ້ານເມືອງ ບັນດິດສອນໃຫ້ເຮົາເຮັດດີ ຄືປະກອບດ້ວຍສຳມາອາຊີວະ ນີ້ຄືບັນດິດອັນແທ້ຈິງຂອງສາສະໜາ.

## 3. ນ້ອມນຳຄຳຂອງທ່ານໄວ້ໃນໃຈ

ຄຳໃດທີ່ທ່ານສອນໃຫ້ເຮົານ້ອມນຳຄຳນັ້ນມາໄວ້ໃນໃຈ ແລ້ວນຳມາປະຕິບັດຕາມ ເຊັ່ນທ່ານສອນວ່າ ໃຫ້ເຮົາມີຄວາມເຄົາຣົບຕະໜັກຊາບຊຶ້ງຮູ້ເຖິງບຸນຄຸນຄວາມດີທີ່ມີຢູ່ແທ້ຈິງ ເຮົາກໍ່ຕ້ອງເຮັດຕາມເພິ່ນສອນ ຫຼື ວ່າເພິ່ນສອນໃຫ້ເຮົາເຄົາຣົບບູຊາບຸກຄົນທີ່ຄວນບູຊາ ເພາະການບູຊານັ້ນເປັນອຸບາຍຢ່າງໜຶ່ງ ສຳລັບຝຶກໃຈຂອງຕົນເອງທີ່ຍັງຫຍາບກະດ້າງທີ່ບໍ່ຍອມຮັບເອົາ ຄຸນນະທັມຄວາມດີຂອງຜູ້ອື່ນໃຫ້ລະອຽດອ່ອນລົງໄດ້ ຜູ້ທີ່ຍັງດ້ອຍປັນຍາບໍ່ເຂົ້າໃຈໃນຄຸນນະທຳຄວາມດີຂອງຜູ້ອື່ນທີ່ຄວນບູຊາ .

## 4. ປະພຶດປະຕິບັດຕາມແນວທາງຂອງທ່ານ

ເຊັ່ນວ່າທ່ານ ສອນໃຫ້ເຮົາຮັກສາສິນ ຄືໃຫ້ສຳຣວມຣະວັງຮັກສາກາຍວາຈາໃຫ້ຮຽບຮ້ອຍ ເຊັ່ນ ຮັກສາສິນ 5.8.10 ແລະ ສິນປະຕິໂມກເຮົາກໍ່ນ້ອມນຳຄວາມນັ້ນມາປະພຶດປະຕິບັດ ຫຼື ເພິ່ນສອນໃຫ້ເຮົາຝຶກສະມາທິ ຄື ການທຳຈິດໃຈໃຫ້ສະຫງົບ ໃຫ້ຢູ່ໃນຖານໃດຖານໜຶ່ງ ເຊັ່ນ ຢູ່ທີ່ກາຍໃຈຕາມແນວຖານສະຕິປັດຖານະສູດຂອງພຣະບໍຣົມມະສາສະດາສຳມາສຳພຸດທະເຈົ້າ ເຮົາກໍ່ນ້ອມນຳຄຳຂອງທ່ານ ແລະປະຕິບັດຕາມທ່ານໃຫ້ໄດ້ຈະເປັນການກຳໜົດສະພາວະຮູບນາມຕິດຕໍ່ເນື່ອງກັນໄປ

ໂດຍບໍ່ຂາດສາຍ ເໝືອນສາຍນ້ຳທີ່ໄຫລ ຈາກທີ່ສູງລົງທີ່ຕ່ຳ ຈົນເຫັນພຣະໄຕຼລັກປະຈັກຊັດໃນອັດຕະພາບ ດ້ວຍປັນຍາຍານຈົນເຖິງມັກຄະຍານພົນລະຍານໃນທີ່ສຸດນັ້ນເອີ້ນວ່າ ປະພຶດປະຕິບັດຕາມແນວທາງຂອງທ່ານ.

ສະຫລຸບແລ້ວການຄົບກັບນັກປາດບັນດິດຍ່ອມໄດ້ປະໂຫຍດກັບຊີວິດຂອງຕົນເອງ ເປັນແສງສະຫວ່າງນຳທາງຊີວິດເປັນຢ່າງດີ ການເກີດເປັນມະນຸດກໍ່ມີຄຸນຄ່າຄຸນນະພາບສູງສົມກັບທີ່ເກີດມາເປັນມະນຸດທີ່ແສນຍາກລຳບາກ.

ທີ່ວັດພຣະທາດຫລວງເໜືອນ ກ.ພ ວຽງຈັນ 21 ມິຖຸນາ ພ.ສ 2543
ພຣະມະຫາບຸນທະວີ ວິໄລຈັກ໌

## ຄວາມຮູ້ບຸນຄຸນ

ໂດຍພຣະສີທອງ ປິ່ນແກ້ວ

ກາບນອບນ້ອມນະມັດສະການພຣະອາຈານໃຫ່ຍປຣີຊາສຸທັມມະໂກສານ ຂ້ານ້ອຍເອງໂດຍໃນນາມເປັນລູກສິດ ຂອງອາຈານໃຫ່ຍຊຶ່ງໄດ້ອາໄສບຸນປາລະມີຂອງພຣະອາຈານໃຫ່ຍ ທີ່ໄດ້ອາໃສຮ່ຳຮຽນ ໄດ້ໃຫ້ການສັ່ງສອນເປັນຢ່າງດີ ມີຄວາມຮູ້ຄວາມສາມາດ ຈົນອາໄສຕົນເອງໄດ້ ກໍ່ເພາະບຸນປາລະມີຂອງພຣະອາຈານໃຫ່ຍຄອຍໃຫ້ຄວາມແນະນຳໄປໃນທາງທີ່ດີ ນີ້ຄືສິ່ງທີ່ເຮັດໃຫ້ຂ້ານ້ອຍ ບໍ່ມີວັນທີ່ຈະລືມມັນໄດ້, ຈາກຄຳສັ່ງສອນຂອງພຣະອາຈານໃຫ່ຍ ປີຊາ ສຸທຳມະໂກສານ

ເພາະສະນັ້ນເນື່ອງໃນໂອກາດ ສະຫລອງອັກຄະມະຫາບັນດິດ ຂ້ານ້ອຍເອງຈຶ່ງຂໍເອົາສິ່ງທັງຫຼາຍທັ້ງປວງຢູ່ໃນສະຖານທີ່ແຫ່ງໃດໆ ຈົ່ງມາປົກປັກຮັກສາພຣະອາຈານໃຫ່ຍຈົ່ງມີແຕ່ສຸຂະພາບເຂັ້ມແຂງຕລອດໄປ. ເພື່ອຈະເປັນທີ່ເພິ່ງພາອາໄສຂອງພວກລູກຫລານ ແລະ ຄອຍແນະນຳເປັນແບບຢ່າງໃຫ້ລູກຫລານຜູ້ເກີດໃໝ່ໃຫ່ຍລຸນໄດ້ນຳເອົາຄຸນຄວາມດີຂອງພຣະອາຈານໃຫ່ຍມາປະຕິບັດ.

ຂ້ານ້ອຍ ພຣະສີທອງ ປິ່ນແກ້ວ ໃນນາມລູກສິດຂອງພຣະອາຈານໃຫ່ຍ ອີກອົງໜຶ່ງທີ່ກຳລັງສຶກສາຢູ່ ຈຶ່ງໄດ້ນອບນ້ອມອວຍໄຊໃຫ້ພອນ ຂໍໃຫ້ພຣະອາຈານໃຫ່ຍຢູ່ກັບລູກຫລານໄປນານໆເທົ່າທີ່ຈະນານ.



# ພຣະພຸດທະພິດ

ໂດຍທ່ານພຣະຄຣູມະຫາ ພຸດທະວົງສາປຣີຊາຍານມຸນີ

ວັດເທພນິມິດ (ທາດຝຸ່ນ)

ທ່ານຜູ້ຈະເຣີນ ຜູ້ໃດເຊື່ອໝັ້ນໃນທັມເຣົາ ແລະ ປະພຶດປະຕິບັດໃນທັມຄໍາສອນຂອງເຣົາຜູ້ນັ້ນໄດ້ຊື່ວ່າ ເປັນຜູ້ທີ່ເຊື່ອຖືເຣົາເຫັນເຣົາໄດ້ເຂົ້າເຖິງເຣົາໂດຍແທ້. ໃນສະຖານທີ່ແຫ່ງໃດມີພຣະພຸທະຮູບ ອັນເປັນສັນຍາລັກຕົວແທນເຣົາ ແລະເປັນທີ່ບໍຣິສຸດ ເຣົາຍ່ອມໄປໃນສະຖານທີ່ນັ້ນ ເປັນບາງເທື່ອຕາມກາລະເວລາ.

ການທີ່ເຣົາຈະປະກົດໃນທີ່ແຫ່ງໃດ ກໍ່ຕ້ອງປະກອບດ້ວຍສິຣິ 3 ປະການຄື **ກາລະ,ເທສະ,** ບຸກຄົນຜູ້ປະພຶດທັມ **ກາລະ** ໄດ້ແກ່ອັນເປັນສິຣິ **ເທສະ** ໄດ້ແກ່ສະຖານທີ່ ອັນເປັນສິຣິ ບຸກຄົນຜູ້ທີ່ປະພຶດທັມໄດ້ແກ່ບຸກຄົນທີ່ເປັນສິຣິ ສິຣິທັງ3ປະການນີ້ ມີຢູ່ໃນທີ່ໃດເຣົາຕະຖາຄະຕະ ຈິ່ງຈະປະກົດໃນທີ່ນັ້ນ, ທໍາມະດາການສ້າງກຸສົນ ຍ່ອມມີອຸປະສັກມາຣົບກວນຂັດຂວາງບໍ່ໃຫ້ເຮັດໂດຍງ່າຍຍ່ອມມີພານຊົນ ຄວາມດີກັບຄວາມຊົ່ວ ພຸດກັບມານ ງານກັບອຸປະສັກຍ່ອມເປັນຂອງຄູ່ກັນໃນໂລກຕະຫຼອດມາ ການປະກອບການກຸສົນ ຈະໄດ້ກຸສົນສູງສົ່ງ ກໍ່ໂດຍສາມາດຕໍ່ສູ້ອຸປະສັກທັງຫຼາຍໄດ້ ເມື່ອມີພຸດທະໃນທີ່ໃດຍ່ອມມີ

ມານໃນທີ່ນັ້ນເປັນທັມມະດາ ເພື່ອໃຫ້ເຂົ້າເຖິງພຸດທະ ຕ້ອງຕໍ່ສູ້ກັບມານ, ແຕ່ບໍ່ແມ່ນດ້ວຍການຂ້າ ຫຼືບຽດບຽນຊີວິດເຂົາ ໃນທາງກົງກັນຂ້າມ ຈິ່ງທັມໂດຍແຜ່ເມດຕາໃຫ້ເຂົາເປັນສຸກອຸທິດສ່ວນກຸສົນຜົນບຸນທີ່ໄດ້ແລ້ວໃຫ້ເຂົາເສັຽ ເຂົາຍ່ອມຫຼີກທາງໃຫ້ເຣົາເອງ ອັນຈະເປັນທາງໄປສູ່ຄວາມ

ສຳເລັດໃນພຸດທະກິດນັ້ນໂດຍແທ້ ເຮົາກ່າວວ່າ ຜູ້ໃດປະຕິບັດໄປຕາມທາງແຫ່ງຄຳສອນຂອງເຮົາຜູ້ນັ້ນຍ່ອມສາມາດເຂົ້າສູ່ຄວາມດັບ ຕາມທີ່ເຮົາໄດ້ກ່າວໄວ້ວ່າ ຄວາມດັບເປັນຄວາມສູນຢ່າງຍິ່ງ **ນິພພານັງ ປຣະມັງ ສູນຍັງ** ໝາຍຄວາມວ່າ ຄວາມດັບແຫ່ງກິເລດເປັນຄວາມວ່າງເປົ່າແຫ່ງດວງຈິດເຮົາບໍ່ເຄີຍກ່າວວ່າ ນິບພານຄືຄວາມດັບແຫ່ງສະພາວະເຊິ່ງແຕກສະຫຼາຍຂອງດວງວິນຍານໄປໝົດສິ້ນ ຢ່າງດຽວກັນນີ້ເຮົາກ່າວວ່າ " **ນິພພານັງ ປຣະມັງ ສຸຂັງ** " ຄວາມດັບອັນເປັນຄວາມວ່າງເປົ່າແຫ່ງດວງຈິດນັ້ນ ເປັນຄວາມດັບ ແລະ ຄວາມວ່າງເປົ່າທີ່ເປັນສຸກຢ່າງຍິ່ງ.

ພິກຂຸ ຜູ້ປະພຶດພົມມະຈັນອັນດີແລ້ວ ໃນທີ່ນີ້ເຮົາສັນຣະເສີນພິກຂຸ ຮູບນັ້ນ ວ່າ ເປັນຜູ້ບໍຣິສຸດ ຄວນແກ່ການຍົກຍ້ອງ ແລະ ເປັນຕົວຢ່າງອັນດີ.

ການທຳຄວາມພຽນປະຕິບັດສະມະຖະພາວະນາ ແລະ ວິປັດສະນາພາວະນາ ໂດຍການທຳຄວາມພຽນປະຕິບັດ ດ້ວຍການທຳພາລະສະມາບັດ ເພື່ອໃຫ້ເກີດກຳລັງໃນການທຳຄວາມພຽນ ໄປຈົນເຖິງນິໂຣທະສະມາບັດ ຄືການດັບທຸກທັງປວງຕາມທີ່ເຮົາຕະຖາຄະຕະ ໄດ້ເຄີຍສອນໄວ້ ເມື່ອຍັງມີຊີວິດຢູ່ເຖິງ ທຸກ,ສມຸໄທ, ນິໂຣດ, ມັກ. ທີ່ຮຽກວ່າ ອະຣິຍະສັດຈະທັງ 4.

ນິບພານບໍ່ໃສ່ຄວາມສຸກ ເປັນຄວາມພົ້ນທຸກ ແຕ່ເມື່ອເວົ້າຕາມໃຈທ່ານທາງໂລກ ແລະ ປຽບທຽບແລ້ວ ຄວາມບໍ່ມີທຸກ ຄືຄວາມເປັນສຸກ.

" **ນິພພານັງ ປຣະມັງ ສຸນຍັງ** " ນິບພານທີ່ກ່າວວ່າສູນສິ້ນໝົດນັ້ນ ຄືຄວາມສູນ ຈາກ ກິເລດຕັນຫາ ຄື ຣາຄະ ໂລພະ ໂທສະ ໂມຫະ ແຕ່ວິນຍານບໍ່ໄດ້ດັບສູນໄປເລີຍ ຍັງຄົງຢູ່ ເມື່ອຜູ້ໃດໄດ້ຮູ້ຈັກໂລກແລ້ວ

ຈະບໍ່ເປັນຜູ້ຕົກທຸກໄດ້ຍາກ ທັງໝົດນີ້ເປັນສັດຈະສູດເຊິ່ງໄດ້ກ່າວສອນໄວ້ ແຕ່ຄາວເຮົາ ຕະຖະຄະຕະ ຍັງມີຊີວິດຢູ່.

ການປະກອບມະຫາກຸສົນ ບໍ່ວ່າຈະເປັນການທອດກະຖິນ ຫຼືບໍລິຈາກຊັບປະຕິສັງຂອນວັດ ທະນຸບໍາຣຸງພຣະພຸດທະສາດສະໜາ ເປັນສິ່ງຄວນທໍາ ເພາະເປັນແນວທາງທີ່ຈະໄປສູ່ສຸກຄະຕິ ໃນສໍາປະຣາຍິກະພົບ.

ອັນການທໍາມະຫາກຸສົນນີ້ ຍ່ອມມີຫຼາຍທາງ ເປັນຕົ້ນວ່າ ທໍາສະມາທິຈິດ ອົບຣົມຈິດ ປາບຈິດທີ່ຟຸ້ງຊ້ານໃຫ້ສະຫງົບ ທໍາຈິດໃຫ້ເປັນທີ່ຮອງຮັບຄໍາສອນຂອງເຮົາ ພຣະອົງເປັນດັ່ງພາຊະນະ ອັນສະອາດ ສົມຄວນທີ່ຮອງຮັບນໍ້າ ບໍຣິສຸດ ການອົບຣົມຈິດໃຈໃຫ້ສົມຄວນຮອງຮັບຄໍາສອນ ກໍ່ສັນນັ້ນ.

ເມື່ອຈິດໄດ້ຮັບການອົບຣົມສັ່ງສອນດີແລ້ວ ຍ່ອມເປັນຈິດສະຫງົບ ເມື່ອຈິດສະຫງົບແລ້ວ ຍ່ອມທໍາສະມາທິໄດ້ ເມື່ອຈິດເປັນສະມາທິແລ້ວ ຍ່ອມສາມາດຕິດຕໍ່ກັບວິນຍານ ທີ່ເປັນໂອປະປາຕິກະ ໃນສົມປະຣາຍິກະພົບໄດ້ ( ໂອປະປາຕິກະ ໄດ້ແກ່ ຜີສາງ ເທວະດາ ອິນພົມ ແລະ ອື່ນໆ ທີ່ບໍ່ເຫັນດ້ວຍຕາ ) ການທີ່ຈິດຈະສາມາດຕິດຕໍ່ ກັບໂອປະປາຕິກະ ໃນສົມປະຣາຍິກະພົບໄດ້ນັ້ນ ກໍ່ຈໍາເປັນຕ້ອງອົບຣົມຈິດ ທັງໃນທາງສະມະຖະກັມມະຖານ ແລະ ວິປັດສະນາກັມມະຖານ ໂດຍທໍາ ສະມະຖະພາວະນາ ເຊິ່ງເປັນການທໍາໃຫ້ຈິດສະຫງົບ ດ້ວຍການເພັ່ງໃນກະສິນ ເຊິ່ງມີ 10 ຢ່າງດ້ວຍການກໍານົດລົມຫາຍໃຈເຂົ້າອອກຄື ອານາປານັດສະຕິ ແລະ ອື່ນໆ ເມື່ອຈິດສະຫງົບເປັນສະມາທິແລ້ວກໍ່ຈະເກີດຍານ ຄືຄວາມຮູ້ແຈ້ງອັນເປັນແນວທາງເຂົ້າສູ່ວິປັດສະນາກັມມະຖານຕໍ່ໄປ.

ໃນດ້ານການປະຕິບັດ ສະມະຖະກັມມະຖານ ເພື່ອທໍາຈິດໃຫ້ສະຫງົບ ໂດຍດໍາເນີນຕາມກະສິນ 10 ອານາປານັດສະຕິ ແລະ ອື່ນໆ ໃນ

ຂັ້ນທຳອິດນັ້ນ ຍັງຕ້ອງພິຈາຣະນາທັມກ່ອນ ເປັນແຕ່ພຽງຍົມກຳນົດໄນ ສິ່ງເຫລົ່ານັ້ນ ໃຫ້ເຫັນຄືງທີ່ກ່ອນ ເມື່ອເກີດເປັນພະລະສະມາບັດໃນຂັ້ນ ຕົ້ນ.

ໃນການທຳຈິດໃຈໃຫ້ສະຫງົບຄື ສະມາທີນັ້ນຍັງບໍ່ເປັນທາງໄປສູ່ ຄວາມສຳເຣັດຕໍ່ຄວາມດັບແຫ່ງທຸກ ຄືນິພພານໄດ້ ດ້ວຍເຫດນີ້ຈຶ່ງຕ້ອງມີ ການພິຈາຣະນາທັມ ໃຫ້ຮູ້ແຈ້ງແທງຕລອດ ເມື່ອຮູ້ແຈ່ມແຈ້ງແລ້ວ ຈຶ່ງຈະ ເຂົ້າສູ່ທາງແຫ່ງນິບພານ ຄືຮູ້ເຖິງຄວາມດັບມອດສະນິດ ຂອງກິເລດທັງ ມວນ.

ການກະທຳຈິດໃຫ້ສະຫງົບນີ້ ຍ່ອມເປັນທາງນຳໄປສູ່ ສະມາບັດ ທີ່ຮຽກກັນວ່າ ນິໂຣທະສະມາບັດ ກໍ່ຈະເຮັດຢ່າງໃດໃຫ້ໄດ້ພະລະສະມາ ບັດນັ້ນ ຕ້ອງຕັ້ງຈິດພິຈາຣະນາໃນທາງທີ່ຈະກໍ່ໃຫ້ເກີດຍານ ແລະປັນຍາ ເຊິ່ງນອກຈາກຈະພິຈາຣະນາດ້ວຍກະສິນແລ້ວກໍ່ຈຳຕ້ອງພິຈາຣະນາວາ ຣະຈິດຂອງຕົນດ້ວຍ ອັນເປັນທາງສູ່ວິປັດສະນາກັມມະຖານຕໍ່ໄປ ພະລະ ສມາບັດ ແລະ ນິໂຣທະສະມາບັດກໍ່ດີ ເມື່ອປະກອບກັນເຂົ້າ ຍ່ອມນຳ ຈິດໃຈເຂົ້າສູ່ພາວະນາ ນິບພານ ດ້ວຍກັນທັງຄູ່.

ການຝຶກຝົນອົບຣົມຈິດໃນການກະທຳສະມາທິ ເພື່ອເຂົ້າສູ່ສະ ມາບັດນັ້ນ ເມື່ອຈິດເປັນສະມາທິຂັ້ນຕົ້ນ ແລະ ຍຶດຢູ່ໃນສະມາທິນັ້ນແລ້ວ ຈິດກໍ່ຈະໄດ້ ພະລະສະມາບັດ ອັນເປັນສະມາບັດທີ່ມີພະລັງ ໃນການທີ່ ຈະພິຈາຣະນາທັມຕໍ່ໄປ ເມື່ອການພິຈາຣະນາທັມເຂົ້າເຖິງຂັ້ນຮູ້ແຈ້ງແທງ ຕລອດຄັກແນ່ແລ້ວ ຈິດກໍ່ເຂົ້າສູ່ນິໂຣທະ ສະມາບັດ ຄືຄວາມດັບ ເຂົ້າສູ່ ຄວາມສະຫງົບຢ່າງແນ່ນອນ ເຊິ່ງຈິດນີ້ຍ່ອມເກີດແກ່ ອະຣິຍະບຸກຄົນ ດ້ວຍ

ການພິຈາຣະນາ ອະນຸດສະຕິ 10 ອິດທິບາດ 4 ອິນຊີ 5 ພະລະ 5 ແລະ ອະຣິຍະສັດຈະ 4.

ນອກຈາກນັ້ນກໍ່ໄດ້ ອິນຊີພະລະ ຄືອິນຊີທັງ5 ມີສັດທາ ສະຕິ ວິຣິຍະ ສະມາທິ ແລະ ປັນຍາຮຽກວ່າ ສັດທິນຊີ ວິຣິຍິນຊີ ສະຕິນຊີ ສະມາທິນຊີ ແລະ ປັນຍິນຊີ.

ນອກຈາກນັ້ນກໍ່ມີພະລະ 5 ຄືສັດທາພະລະ ສະຕິພະລະ ວິຣິຍະພະລະ ສະມາທິພະລະ ແລະ ປັນຍາ

ພະລະ ເມື່ອຜູ້ໃດສາມາດອົບຮົມຈິດ ແລະນຳຈິດເຂົ້າສູ່ການພິຈາຣນາດັ່ງກ່າວແລ້ວ ເປັນອັນຫວັງໄດ້ເຊິ່ງພຣະນິບພານແນ່ນອນ ເຮົາຕະຖາຄະຕະກ່າວວ່າ ( ນິບພານ ເປັນການດັບຢ່າງບໍຣິສຸດ ບໍ່ມີກິເລດເຈືອປົນ ໝາຍຄວາມວ່າ ກິເລດດັບມອດໝົດສິ້ນໂດຍບໍ່ເຫຼືອ )

ແລະການທີ່ຈະດັບມອດກິເລດໃຫ້ ໄດ້ຢ່າງແນ່ແທ້ກໍ່ຈຳເປັນຕ້ອງດັບຕັນຫາ ຣາຄະ ອຸປະທານ ແລະ ກາມ ຕັນຫາ ຄືຄວາມຢາກໄດ້ດີ້ນຣົນ ມີການຢາກໄດ້ ຢາກບໍ່ໄດ້ ຢາກມີ ຢາກບໍ່ມີ ຣາຄະຄືຄວາມໝົດຍ້ອມກຳລັງກາຍ ຄືຄວາມຢາກຄວາມໃຄ້ ເມື່ອດວງຈິດຫລຸດພົ້ນຈາກຄວາມຜູກ ຄື ກາມະຕັນຫາ ຣາຄະ ແລະ ອຸປາທານແລ້ວ ດວງຈິດນັ້ນກໍ່ເຂົ້າເຖິງທາງພຣະນິບພານ ໂດຍທ່ຽງແທ້

ນອກຈາກນັ້ນຍັງມີການພິຈາຣະນາທັມໝວດອື່ນ ໆ ອີກ ເຊັ່ນ ໝວດໂພດຊົງ 7 ເປັນຕົ້ນ ແລະ ການພິຈາຣະນາທັມ ໂດຍສະເພາະເຈາະຈົງໄດ້ແກ່ ອັດຖັງຄິກະມັກ 7 ອັນເປັນທາງນຳໄປສູ່ນິບພານໄດ້ຢ່າງດຽວກັນ ກັບມີຊານອີກຢ່າງໜຶ່ງ ເຊິ່ງຖືກັນວ່າ ຖ້າໄດ້ກະທຳໃຫ້ເຖິງທີ່ສຸດແລ້ວ ຍ່ອມເປັນເຄື່ອງຊີ້ໃຫ້ເຫັນເຖິງວິທີແຫ່ງດວງຈິດ ທີ່ຈະເຂົ້າສູ່ຄວາມດັບ ໃນອະນາຄົດໄດ້ລ່ວງໜ້າ ສາມາດກຳນົດຮູ້ ວາຣະທີ່ຈິດຈະດັບເຂົ້າ

ສູ່ນິບພານ ໄດ້ຢ່າງແນ່ນອນ ດັ່ງທີ່ພຣະອະຣະຫັນ ທັງຫຼາຍໄດ້ຊາບເຖິງກາລະ ແຫ່ງນິບພານຂອງຕົນລ່ວງໜ້າ ຊານດັ່ງກ່າວນີ້ຮຽກວ່າ ຊານອິດທິບາດ ຄື ສັນທະ ວິຣິຍະ ຈິດຕະ ວິມັງສາ.

ພຣະພຸດທະເຈົ້າ ຊົງກ່າວວ່າ ພິກຂຸທັງຫຼາຍຜູ້ປະພຶດປະຕິບັດທັມ ແຫ່ງສາສະໜານີ້ ຫາກທ່ານປາຖະນານິບພານ ຈົ່ງພຽນພະຍາຍາມ ປະພຶດປະຕິບັດ ຕາມຫລັກ ແລະ ຫົນທາງທີ່ເຮົາກ່າວໄວ້ ໃນທີ່ນີ້ເທີ້ນ.

ດູກ່ອນພິກຂຸທັງຫຼາຍ ອັນທາງນັ້ນມີຢູ່ ແຕ່ຜູ້ຈະເດີນຕາມນັ້ນ ບໍ່ຄ່ອຍມີພິກຂຸຜູ້ປະພຶດປະຕິບັດທັມ ຜູ້ສຶກສາຮ່ຳຮຽນທັມ ຍ່ອມໄດ້ຊື່ວ່າເປັນລັດຊີພິກຂຸ ສ່ວນພິກຂຸຜູ້ຮູ້ທັມ ແຕ່ບໍ່ປະຕິບັດທັມ ກະທຳຕົນອອກນອກຈາກແນວທາງແຫ່ງການບຳເພັນຟຶດພົນມະຈັນ ພິກຂຸເຫລົ່ານັ້ນໄດ້ຊື່ວ່າ ອະລັດຊີພິກຂຸ.

ພິກຂຸຜູ້ຕັ້ງໃຈປະພຶດທັມ ແຕ່ບໍ່ຮູ້ທັມ ເພາະບໍ່ໄດ້ສຶກສາໃນພຣະທັມ ວິໄນ ແຕ່ພິກຂຸຜູ້ຮູ້ທັມ ຫາກບໍ່ປະພຶດທັມ ມາສົມຄົບຢູ່ໃນສັງຄົມມົນທົນ ດຽວກັນເມື່ອໃດເມື່ອນັ້ນສາສະໜາຂອງເຮົາຕະຖາຄະຕະ ຍ່ອມເສື່ອມລົງ ແລະ ສິ້ນສຸດ.

ສະນັ້ນຂໍທ່ານທັງຫຼາຍ ຈົ່ງເປັນຜູ້ຕັ້ງຕົນຢູ່ ໃນທາງສາຍກາງອັນເປັນທາງທີ່ຖືກຕ້ອງເຖີດ ເພາະເປັນທາງດຽວເທົ່ານັ້ນ ທີ່ນຳທ່ານໄປສູ່ສຳປະຣາຍິກະພົບໃນອະນາຄົດເບື້ອງໜ້ານີ້ ຈົ່ງກະທຳໃຫ້ມາກ ເພາະເປັນທາງທີ່ຈະຊ່ວຍໃຫ້ປະສົບ ຄວາມພົ້ນທຸກຢ່າງແນ່ນອນ ເມື່ອກະທຳໃຫ້ມາກຫຼາຍແລ້ວ ທ່ານທັງຫຼາຍກໍຈະສິ້ນກັງວົນ ເມື່ອດວງຈິດສິ້ນຄວາມເປັນກັງວົນແລ້ວ ດວງຈິດກໍ່ຈະເບົາ ເພາະວ່າງຈາກກິເລດ ເມື່ອດວງຈິດວ່າງຈາກກິເລດແລ້ວ ດວງຈິດກໍ່ຈະຜ່ອງໃສບໍຣິສຸດ ອັນດວງຈິດທີ່ຜ່ອງ

ໃສບໍຣິສຸດ ປຽບປະດຸດດັ່ງດວງແກ້ວ ຍ່ອມເປັນດວງຈິດທີ່ສົມຄວນແກ່ການເຂົ້າສູ່ຄວາມພົ້ນທຸກ ພົ້ນກິເລດຢ່າງສິ້ນເຊີງ ອັນດວງຈິດທີ່ປາດສະຈາກກິເລດຢ່າງສິ້ນເຊີງແລ້ວຍ່ອມເຂົ້າສູ່ຄວາມດັບສະນິດ ອັນເຕັມໄປດ້ວຍພະລັງ ທີ່ຈະຄອຍປ້ອງກັນ ບໍ່ໃຫ້ຕ້ອງກັບມາວຽນວາຍຕາຍເກີດຢູ່ໃນກະແສທານແຫ່ງກັມ ເປັນອຳນາດແຫ່ງສັງສາຣະວັດ ບໍ່ຕ້ອງມາວຽນວາຍຕາຍເກີດ ເພື່ອຄວາມທຸກທໍຣະມານ ແລະ ບໍ່ຕ້ອງໃຊ້ກັມເກົ່າຕໍ່ໄປ ນັບວ່າສິ້ນຊາດຄືຄວາມເກີດ ສິ້ນມະຣະນະ ຄືຄວາມຕາຍ ສິ້ນເວນຄືການຜູກໜີ້ ແລະ ສິ້ນວິບາກ ຄືການໃຊ້ຜົນແຫ່ງກັມ ດວງຈິດກໍເຂົ້າສູ່ພຣະນິບພານຢ່າງທ່ຽງແທ້ແລ.

## ພຸດທະສາສະໜາກັບສັງຄົມ

ໂດຍ ພຣະຊາຍຄຳ ຈຳປາອຸທຸມ

ພຣະພຸດທະເຈົ້າສະມະນະໂຄດົມ ສະເດັດອຸບັດເກີດຂຶ້ນໃນທ່າມກາງຂອງສັງຄົມທີ່ເປິະເປື້ອນ ດ້ວຍການແບ່ງແຍກຊົນຊັ້ນວັນນະ ຖືທິດຖິ ແລະມານະ ຖືຊາດ ຖືສັກ ຖືຕະກຸນ ຕາມລັດທິພາມ ທີ່ສັ່ງສອນກັນມາຊຶ່ງເປັນມູນເຫດແຫ່ງການແຕກແຍກຂອງສັງຄົມ ອັນເກີດຈາກລັດທິດັ່ງກ່າວ ເມື່ອພຣະພຸດທະອົງຊຶ່ງບຳເພັນພຽນ ໄດ້ຕັດສະຣູ້ທັມ ເປັນອະຣິຍະແລ້ວ ຄັນຊຶ່ງແຈກແຈງທັມນັ້ນ ກໍຊົງປະຕິເສດລັດທິຖືຊົນຊັ້ນວັນນະອັນເປັນເຫດໃຫ້ເກີດຄວາມແຕກແຍກໃນສັງຄົມ ຊົງປະກາດຄວາມສະເໝີພາບຂອງມະນຸດ ແລະ ຮັບຮອງເສຣີພາບຂອງມະນຸດທັງຫຼາຍ.

ພຣະພຸດທະອົງຊົງສະແດງວ່າ

ກຳເນີດ ຊາດຕະກຸນບໍ່ໄດ້ທຳໃຫ້ບຸກຄົນເປັນພາມ (ຜູ້ປະເສີດ)

ກຳເນີດຊາດຕະກຸນ ບໍ່ໄດ້ທຳໃຫ້ບຸກຄົນເປັນກະສັດ ເປັນພໍ່ຄ້າ

ຄວາມປະພຶດຂອງບຸກຄົນເປັນເຄື່ອງກຳນົດບຸກຄົນ

ຊາດຕະກຸນ ບໍ່ໄດ້ເປັນເຄື່ອງກຳນົດຄວາມແຕກຕ່າງກັນຂອງບຸກຄົນ.

ພຣະພຸດທະອົງຊົງຕັ້ງສັງຄະມົນທົນຂຶ້ນ ເປັນມົນທົນແຫ່ງຄວາມສະເໝີພາບ ແລະ ເສຣີພາບ ທຸກຄົນຈະເກີດໃນຕະກຸນໃດ ເຫລົ່າໃດ ຈະມາຈາກຕະກຸນພາມຫລືຕະກຸນກະສັດ ເມື່ອເຂົ້າມາຢູ່ໃນພຣະພຸດທະສາສະໜາ ຕ້ອງສະເໝີພາບກັນໂດຍພາວະ ມີອຸທາຫອນອີກອັນໜຶ່ງ ພຣະອຸບາລີເຖຣະ ຜູ້ເລີດໃນທາງວິໄນ ມາຈາກຕະກູນຊ່າງຕັດຜົມ ເມື່ອເຂົ້າມາບວດໃນ ພຣະພຸດທະສາສະໜາກໍ່ມີພາວະສະເໝີເໝືອນກັບພິກຊຸ ເຫລົ່າອື່ນ ຜູ້ມາຈາກຕະກຸນທີ່ສູງສົ່ງກວ່າ ພຣະຈະຣິຍາວັດຂອງພຣະພຸດທະເຈົ້າອັນນີ້ ນັກປະຫວັດສາດ ຍອມຮັບວ່າ ພຣະສະມະນະໂຄດົມເປັນບຸກຄົນທຳອິດຂອງໂລກ ທີ່ປະກາດຣະບອບເສຣີພາບ.

ການທີ່ບຸກຄົນຈະຜູກພັນມິດສະຫາຍ ຫຼືສັງຄົມໄວ້ໄດ້ຕ້ອງປະຕິບັດທັມທີ່ເອີ້ນວ່າ ສັງຄະຫະວັດຖຸ 4 ປະການຄື:

1 ທານ ບໍ່ຂີ້ຖີ່ໜຽວແໜ້ນ

2 ປິຍະວາຈາ ເວົ້າຈາອ່ອນຫວານໜ້າເຄົາຣົບ

3 ອັດຖະຈະຣິຍາ ທຳປະໂຫຍດໃຫ້ເກີດຂຶ້ນ

4 ສະມານັດຕະຕາ ທຳຕົວສະເໝີກັນ, ເທົ່າທຽມກັນ

# ໂຮມ ຄຳສອນຍິງຊາຍນ້ອຍໃຫ່ຍ ເຖົ້າແກ່ແມ່ບ້ານ

ໂດຍ: ພຣະຫລັກຄຳຈຳປາສັກ ນັກຄະຣາຈານ (ເຄນ ທະນາກອນ )

ບັດນີ້ ຂ້າຈັກໂຮມທົວຂໍ້ ຍໍຄວາມແຕ້ມຕື່ມ
ລັດເລັ້ງລຽງລວບຂໍ້ ຂໍແຈ້ງຈິ່ງຖະແຫລງ
ອັນວ່າ ຄົນຢູ່ໃນໂລກນີ້ ຄວາມຕະໜີກໍມີຫຼາຍ
ຫລົງໄຫລລືມໄລລ່ະ ບໍ່ຮຸ່ງທັມທານເກື້ອ
ມີຂອງເຫຼືອແຕ່ພຽນແພງໄວ້ ບໍ່ແນມກາຍຍາມຊິແກ່
ສັງຂານກະດຽວບໍໜ່ວງແໜ້ນ ແປປິ້ນປິ່ນໄປ
ບໍ່ວ່າ ໜຸ່ມແລະເຖົ້າ ຖອຍຖ່າຍເບົາບົກ
ຕົກຢູ່ໃນຊະຣາພະຍາທິທັມໂມ ບໍ່ແມ່ນໂຕຊິໜີພົ້ນ
ຕ່າງຄົນກໍ່ຕ່າງຫຶງຫວງໄວ້ ວັດຖຸກາການກໍ່
ມໍຣະດົກເຊື່ອມຊົ້ນ ສູນສ້ວຍບໍ່ອ່ວຍຕາມ
ໃຜໆກໍ່ຍັງຍ່ອມຮູ້ ໃນເຈດທະໃຈຈິດ ຢູ່ແລ້ວ
ຫາກບໍ່ນຳທັມເທ ເທສະໜາສອນຊີ້
ເວັ້ນແຕ່ເມທີເຊື້ອ ຊຸມຊິນຊາວປາດ
ເພິ່ນນັ້ນຮູ້ສະລາດແນ່ແລ້ວ ໃຈບໍ່ແງ້ວກັງວການ
ຕັດອາໄລອອກໄດ້ ຄາຣະວາດທັງທໍ
ຈັດແຈ່ງປຸນໄປທານ ຫວ່ານຜົນຜາງໄວ້
ເປັນຂັ້ນໃດເດີນຂຶ້ນ ສະຫວັນທອງທາງໄຕ່
ລົນທານທ່ານວ່າຫຼຽມດັ່ງມ້າ ພາຂ້າມແກ່ງການ
ນຳເອົາຄົນຂົນຂ້າມ ສະໝຸດໂທທັງສີ່

ດ້ວຍເດດສິບສ່ວນສ້າງ ສິມໄວ້ລະວ່າງຫລັງ
ເໝື່ອນດັ່ງເທພາຟ້າ ສະຫວັນຕາຕອງໂລກ
ທ່ານສະເຫວີຍສິບສ້າງ ປາງຟ້າຟາກສະຫວັນ
ໄດ້ຢູ່ຜາສາດກ້ວາງ ກ້າວເກົ່ງອະມະຣິນ
ຍູທ່າງກິນຂອງທິບ ບໍ່ຂາດຄາວເຄືອງແຄ້ນ
ຄືນຢູ່ແມນເມືອງນັ້ນ ພັນປີບໍ່ຕາຍງ່າຍ
ຮ້ອຍປີໃນມະນຸດໂລກລ້ານ ບໍ່ປານມື້ໜຶ່ງສະຫວັນ ທ່ານເຮີຍ
ຟັງເຢີເຖົ້າແກ່ພ້ອມ ພຽງພໍ່າພໍສະເໜີ ກໍດີທ້ອນ
ຂໍແກ່ນວນນິງຮາມ ສໍ່າຫລານເຫລັນນ້ອຍ
ໃຫ້ຄອຍພິຈານແຈ້ງ ໃນໃຈຈິດທະເຈດ
ເຫດວ່າເຮົາແນະຂໍ້ ໃຂໃງ້ເງື່ອນເງົາ
ຫວັງໃຫ້ເປັນປະໂຫຍດເຍື້ອນ ຍາມຍາກກໍຍັງອິດ
ຊີ້ຣິດທັມທານສອນ ສັ່ງຄອງຄຸນແກ້ວ
ພໍໃຫ້ເປັນແນວໜ້າ ມໍຣະຄາຕາມໄຕ່
ຫວັງກໍາໄລໄດ້ຍ້ອນ ບຸນຂ້ອນຜູ້ແຕ່ງກອນ ແດ່ແມ
ຈິ່ງໄດ້ອິດສາຕັ້ງ ຂັນຕິແຕ້ມແຕ່ງ
ບໍ່ແມ່ນແກ້ງອວດອ້າງ ວາງກະທູ້ທ່າສອນ
ອັນໜຶ່ງ ຍາກຍິ່ງກວ່າຍາກນີ້ ມີແຕ່ຕັນຫາ
ອະວິດຊາປົກປິດ ປ່ອງແປວໄປຊ້າ
ພາເຮົາຫລົງຫລໍຄ້າງ ກາງກັມບໍ່ຮູ້ຮ່ອມ
ມີແຕ່ຫອມຮັກເຂົ້າ ຂອງເຈົ້າວ່າແຕ່ດີ
ຖ້າວ່າກາຍມຸດມ້ອຍ ມໍຣະນາດນັ່ງໄປ ເມື່ອໃດ
ເມັຍໂຕກໍຊິເປັນເມັຍເຂົາ ດັ່ງໝູ່ເຮົາເຄີຍພໍ້

ຂອງພໍກິນພໍໃຊ້ ພໍກະຊານຊິງຢູ່
ຂອງຄູ່ສິບສ່ວນສ້າງ ວາງໄວ້ກໍເປົ່າຜິນ
ກໍບໍ່ຕາມຕິນໄດ້ ເອົາໄປຫານຫາບ
ບາບບຸນພຸ້ນຕິທານວ່າເປັນ ພວກເພື່ອນເຕືອນເຈົ້າໄສ່ທາງ
ເຫດນັ້ນບໍ່ຄອນປະຫມາດມ້າງ ໃນຣະຫວ່າງເປັນຄົນ
ບໍ່ຢູ່ດົນດອກການມກາຍ ຖ່າຍສູນສະເຫມີນໍ້າ
ອຸປະໄມປະມາຜ້ຽງ ພຽງພະກາຈູມຈົ້
ມື້ມ່ວງຝົດຝາດຕົ້ນ ທະລິງກ້ານກໍ່ກວາມ
ຍັງຍ່ອມຊຸທ່ວງທິ້ງ ຫາຍຮູບຮາມຜິນ
ມີທໍ່ທິວແມງວັນຊຸ ໃຫ້ຂາດແຄນເຂີນຕົ້ນ
ບາງຜ່ອງພວມພີພົ້ວ ຣະອອງອາຍເອົາກິ່ນ
ຜ່ອງກໍ່ກາຍແກ່ກ້ານ ປະມານຫ້າມເທິ່ມເຫຼືອງ
ເລີຍເລົ່າຊຸຂາດຂ້ວນ ເຂີນກິ່ງໄກກິກ
ເຣື້ອງນີ້ເຂົ້າຢູ່ໃນສັງຂານ ບໍ່ທ່ຽງຊັ້ນຄືນໍ້າ
ຍາມໃດທາກວ່າສັງຂານມ້ວນ ເມື່ອແມນມາງຮູບ
ນັ້ນແລ ເຂົາເຫລົ່າເອົາສາດຫຸ້ງມ ໝອນມູ້ເນົ່າເໝົາ
ເອົາມາໝູນໃຫ້ເຈົ້າ ຜ້າເກົ່າເຊົາຖີ້
ທາງມືເຂົາພັດເອົາຂອງມັດ ສອກຮັ້ງຮຽງໄວ້
ເຂົາໃຫ້ນອນດອຍຊໍ້າ ນໍາເຮືອນດອຍລ່ອງ
ກາບກ້ວຍປ້ອງປ່ອງຂ້າງ ຜາງຮ້າຍກໍຮ່າວເທັນ
ຄາວເມື່ອຍັງເປັນນັ້ນ ພາກັນຊຸດກິ່ນ
ໂພນໝາກເຂືອໝາກແຄ້ງ ປະລິງສ້າງຊ່າງແປງ
ທາໝູ່ຊົ້ນ ມັດສາຊາດຊາວປາ

ຍາມໄດ້ມາທຸມທິວ ຊື່ນຊົມເຊີຍຍ້ອງ
ປອງໄປຫາມາໄດ້ ແນວໃດບໍ່ຮັງກຽດ
ແມ່ນຊິໄດ້ຂຽດນ້ອຍ ກໍພ້ອຍປີ້ງຊູ່ກິນ
ບາດວ່າສິ້ນຊາດແລ້ວ ແນວໜຶ່ງບໍ່ໄປນຳ
ມີແຕ່ທຳຄວາມໝາງ ໜ່າຍສະອາງອັນຮ້າຍ
ກັບເຫລັກໄຟເຂົາໃຫ້ ແນວໃດບໍ່ເປັນທ່າ
ກະຕ່າທັງແອບນ້ອຍ ກໍພອຍຊ້ຳຂາດຣິມ
ພ້າກໍແມ່ນພ້າຂີໝ້ຽງ ໂອເກົ່າກະບວຍທັກ
ຢາກໍແມ່ນຢາສຽມສັບ ໃຫ້ສູບຣິມໂຮຽຮີ້ນ
ຂອງຊິຮອງກິນນັ້ນ ພລັນເລວເຫີລອຊິວ່າ
ຖ້ວຍຂີ້ຮ້າປາກຫັງນ ກະບຽນຮ້າງຮ່ອນຮຳ
ນີ້ແລ້ວ ອັນເຂົານຳໄປໃຫ້ ຄວາມອາໄລຄິດຮອດ
ບາງຄົນຮ້ອງຮ່ຳໃຫ້ ພໍໄດ້ວ່າຄິດເຖິງ
ເທິງຊ້ຳເຂົາຫ້າມໄວ້ ຮ້າຍຮໍ່ໃຫ້ເຊົາສາ
ຢາຊິພາໂລລວນ ຮ່ອນທິວຫາໃຫ້
ເຂົາຫາກຕາຍໄປແລ້ວ ແນວນາມຫາປະໂຍດ ບໍ່ມີແລ້ວ
ຢ່າຊິຮ້ອງຮ່ຳໄຫ້ ເສັຍນ້ຳພະເນດຕາ
ຫາລາຫວນຫາຝ້າຍ ກັນໄພຊິແລ້ນແດ່
ມັນຊິມາກ່ຽວກັ້ງວ ກັນໄວ້ຢ່າໃຫ້ມາ
ນັບແຕ່ພວກລູກເຕົ້າ ພ້ອມເຜົ່າພັນແຖວ
ເຊື້ອສຳແນວນຳເຂົາ ໃຫ້ຂາດກັນແຕ່ວັນນີ້
ຕາຍເປັນຜີໜີໄກເຜື້ອນ ຢ່າມາເຢືອນຢາມຢັ້ງ ກັນດາຍ
ຢ່າຊິມາກ່ຽວໃກ້ ໄປທ້ອນໃຫທ່າງໄກ

ອັນໜຶ່ງຢ່າຊິຖິ້ມໄມ້ຄ້ອນ ຫລອນຫລອກໃຫ້ເຫັນໃຈ
ຕັດອາໄລລືມຫລີງ ຂາດລີງແຕ່ວັນນີ້
ແມ່ນວ່າຍັງອາໄລນຳບ້ານ ເຮືອນຊານເຊົາຢູ່
ຫງວມາຫລອນຫລອກຫລິ້ນ ຕີນຊິຊ້ຳຖີບທຳ
ຍັງບໍ່ແລ້ວ ອວນແອ່ວໃຫ້ເອົາໄປ
ພະຍາດໃດຕິດຕາມ ໃຫ້ຫາບຫາມໜີຊ້ຳ
ສ່ວນວ່າຄຳຫາໄດ້ ຄາວສະໄຫມຍັງຢູ່
ອັນນັ້ນກໍເປັນຂອງໝູ່ສິ້ນ ດິນບ້ານກໍແມ່ນເຂົາ
ນັບແຕ່ເຂົ້າຢູ່ເລົ້າ ຂອງເກົ່າເຮົາເຮັດ
ກໍເຫລົ່າສູນເສັງເສັດ ເມັດດຽວບໍ່ມີໄດ້
ໂພໃຄຄວນຄືນແທ້ ເຮືອແຫກໍຄະຄ່ຽນ
ງົວກວຽນຫາໄດ້ມາຊ່ວງໃຊ້ ໃຊສ້ອນກໍເປົ່າດາຍ
ຄັນຕາຍໂລດບໍ່ຕາມຕິດກົ້ນ ໄລຜິນເສັຍປະໂຍດ
ສັນໂດດເຫລືອແຕ່ຄວາມຢາກໄດ້ ແພງໄວ້ໃຫ້ມັ່ງມີ
ຜູ້ດີເຂົາໃຈເຂົ້າ ເອົາທານນຳແດ່
ຜູ້ເຫັນແກ່ມີແຕ່ຄວາມຢາກໄດ້ ຖະນອມໄວ້ຢ້ານແຕ່ເສັຍ
ເມັຍໂຕຊ້ຳພັດເປັນເມັຍເພື່ອນ ຜົວໂຕຊ້ຳພັດເປັນຜົວເພື່ອນ
ເຣື່ອງນີ້ຂໍໃຫ້ເຈົ້າພີ່ນ້ອງ ຟັງແລ້ວໃຫ້ຣິນຕອງ
ຄິດເບິ່ງຍາກມອດມ້ຽນ ຣິດຊີວມໍຣະນາ ນັ້ນນາ
ເຂົາເຫລົ່າພາກັນມາ ໂຮຈົ້ນເຮືອນຮ້ານ
ທຳອາການຂັບຮ້ອງ ປອງສຽງໃສປີບ
ຫົວຫົ້ນຫ້າວ ຊາວບ້ານໝີ່ນັ້ນ
ຈົ້ນສິບເຈົ້າ ເມັຍເຮົາກໍຍັງມ່ວນ

ເຊັ່ນແຕ່ຫລານລູກເຕົ້າ ເຂົາກໍເຮີ້ເຫີຍຫິວ
ເຣື່ອງນີ້ເປັນໜ້າອຸດສູແທ້ ບໍ່ຈັກແປໄປບອກໄດ້ແລ້ວ
ຮອດມື້ເຂົາຫາມອອກປ່າຊ້າ ເປັນໜ້າເວທນາ
ບາງຄົນເອົາຮຽວເຊືອ ໜາມໂຮມຮີງຜູກ
ກັນກິດແປວປ່ອງຫ້າງ ທາງຊິເຂົ້າຂອກເຮືອນ
ຢ້ານແຕ່ມາລ່ວງເຂົ້າ ເຂົາກຽດເກງກົວ
ໄປນິມົນເອົາສົງ ສິ່ງຂວນເຂົາເວົ້າ
ຊໍາພັດເຫລົ່າເອົາຮຽວຄ້ອມ ໜາມຄອມກວາຍກວດ
ລວດເຫລົ່າເອົາ ລົດລ້າງ ນໍ້າຮ້ານຣິ່ມຊານ
ທັງຊໍ້າຜາຍຫວ່ານເຂົ້າ ເຂົາໃສ່ໃນກະໂທງ
ຄານໂລງຊໍ້າພັດມີແນວມັດ ຈ່ອງຈູງຈໍາຊໍ້າ
ນໍາເອົາເນນນາມນ້ອຍ ສົງຄະນາແນວໜຸ່ມ
ຊຸມໃດພວກພີ່ນ້ອງ ໃຫ້ມາປ້ອງຈ່ອງຈູງ
ຄັນວ່າ ຮອດປ່າຊ້າ ເຂົາພັດວ່າໃຫ້ວຽນຂວາ
ບາງຜ່ອງເອົາຄານຊຸກ ໃສ່ຊິນຊູນຮ້າ
ແລ້ວເຫລົ່າຍໍໂຍງຂຶ້ນ ກອງຟືນໄຟໃສ່
ຄາວນັ້ນໃຜໆເຂົາກໍຟ້າວ ກັບບ້ານສູ່ຖານ
ຍັງແຕ່ເຈົ້ານັ້ນແລ້ວ ຊິນອນຢູ່ຄົນດຽວ
ນອນຢູ່ໃນໄພຊຽວ ເຮ່ວດຽວດອນຮ້າ
ແນມເບິ່ງຕາກົວຢ້ານ ພູມສະຖານແຖວປ່າ
ຕັ້ງວ່າມັນຣິກເຮືອ ໃຜບໍ່ເຂົ້າຍ່ອງຍາມ
ຈັກໜ່ອຍ ເຈົ້າຊິໄດ້ສາດຫັ່ງນ ໝອນຂາດເຂົາໝູນ
ແອບຢາກັບເຫລັກໄຟດວງໜາ ພໍ່ຢາແນວເວົ້າ

ເອົາໄປນອນໃນເທື້ອມ ທຶມເທືອມທາງເຖືອນ
ເດືອນມືດບໍ່ມີໄຟຊິໃຕ້ຊ່ຳ ຊິຕຳໄມ້ກໍຊ່າງຕາມ
ໄດ້ຍິນ ຕັ້ງແຕ່ນົກຮ່ຳຮ້ອງ ກະແຊວແສ່ວສິນສະແຫວງ
ນົກກະບາບິນເບີ່ງ ແສ່ວເຊີງຊິມບິ້ງ
ພ້ອມພ່ຳໝູຈຸກຈ້ອນ ນອນຮັງຮຽງຄູ່
ທຸກໝູ່ເຄົ້າອັ່ນຮ້ອງ ຍາມຂ້ອນຄ່ຽນຄອນ
ບໍ່ອາດນັບອ່ານໄດ້ ສຽງເສບໃນໃພ
ຝູງໝູ່ຊຸມຊາວເສືອ ພຽກຄະນານຳຮ້ອງ
ມີທັງຟານສະແຫວງດ້າວ ສະຫາວຄວາມໂພດໂພ່
ອັນນັ້ນສຽງເສບເຈົ້າ ໃນດ້າວຊິຕ່າງຫລັງ
ນັບວັນແຕ່ຊິເຮັດໜ້າເສົ້າ ກອດເຂົ່າງິ່ງເຫງົາ
ເອົາອັນໃດມາເປັນສິ ຊ່ວຍຊູບໍ່ມີໄດ້
ມີແຕ່ເຈົ້າຊິນອນຊະແຄງໃຫ້ ແກມດິນດອມປວກ
ງວກພຸ້ນພີ້ ຫາເພື່ອນກໍ່ບໍ່ເຫັນ
ທຸກໜຶ່ງຍັງຕື່ມໃໝ້ ມື້ໃໝ່ຊິມາເຖິງ
ເຊົ້າຊິກິນວັນຫລັງ ກໍອັ່ງມາຄວາມຮ້ອນ
ຄຶດຫຼາຍນອນບໍ່ມີຫລັບໄດ້ ຄຶງຕາຍໂຕສັ່ນ
ຈິດສະບັ້ນແບ່ງເບື້ອງ ຂວັນໄຂ້ຫລ່າເຫລືອງ
ຄຶດເຫັນຕັ້ງແຕ່ເມັຽຢູ່ບ້ານ ຊິອ່ານຫາຄຸນ
ເຂົາຊິທຳບຸນນຳ ກໍບໍ່ມີວັນພໍ້
ເຂົາແຫ່ງພໍໃຈດ້ວຍ ດອມຊາຍຊິມໃໝ່
ຄຶດໃຄ່ຫາແຕ່ງເບື້ອ ປະສິງຢ້ອງຍອກຊາຍ
ເຂົາຊິອາໄລຊ່ຳ ນຳເຮົາບໍ່ມີດອກ

ມີແຕ່ເຂົາຊິຫາໃຫມ່ຊ້ອນ ຊອນຊູ້ຮ່ວມສະເໜ
ຟັງເຢີພວກແມ່ປ້າ ມາຕຸຮາດລູງຕາ ກໍດີ
ຄັນມີຫາລາທຳພຽນທານ ຫວ່ານຜົນຜາຍໄວ້
ເປັນກຳລັງໃລເມືອໜ້າ ພາເຮົາຊິໄດ້ເພິ່ງ
ຍາມຫິວຍັງຊິໄດ້ອ່ວຍໜ້າ ຫາຄົນຊອກກິນ
ຂອງໂຕມີຕິດກົ້ນ ໄປດິນບໍ່ລຳບາກ
ຍາກແຕ່ຂອງຂາດຂ້ອນ ສະບຽງເຄົ້າເກົ່າບໍ່ມີ
ຕາຍເປັນຜີໜີໄປໜ້າ ບໍ່ຄືນມາຫາມຫາບ ເອົາແລ້ວ
ມີແຕ່ສິນແລະທານທ່ານສ້າງ ລືມໄວ້ຊິໃຕ່ຕາມ
ສິນນີ້ແມ່ນຊິນຳເຮົາໃຫ້ ໄປທາງຫຽວຊື່
ບໍ່ໃຫ້ຫລົງເສັ້ນເຄົ້າ ສູນເສົ້າເປົ່າແປນ
ໃຜບໍ່ນຳເສັ້ນເຄົ້າ ເກົ່າກ່ອນປາງປະຖົມ
ແຕ່ບູຣິມບູຮານເຮົາ ທ່ຽວປະທວນທາງໄວ້
ຢ້ານແຕ່ຕຳຕໍໄມ້ ໂຄມໜາມໜຽວໝ່ວງ
ຕີນແຕກຕຳຕ່ອຍຕ້ອງ ຕໍແຕ້ຊິຕື່ມແຜ
ຈຶ່ງວ່າເປັນຄົນມາຊາດນີ້ ໃຫ້ມີແດ່ສິນສັດ
ສິນກໍໃຫ້ເປັນສິນຄັກ ຄູ່ທານທຽມພ້ອມ
ຢ່າຊິໃຫ້ເປັນສິນເລົ້າ ສິນເບົາສິນດ່າງ
ສິນບໍ່ຢ້າງໃຫ້ແທ້ງ ແຮງຮ້າຍກວ່າບໍ່ມີ
ວ່າຈຳສິນຊ້ຳພັດເປັນຈຳສິ້ນ ໄດ້ຍິນບໍເຂົາວ່າ
ຈຳສິນບໍ່ທັນຮອດມື້ເຊົ້າ ພັດກິນເຫລົ້າຕື່ມສິນ
ຍັງບໍ່ແລ້ວທໍ່ນັ້ນ ພັດລັກອີກແຖມເຖິງ
ບໍ່ທັນເຫັງນິມມານ ທ່ຽວປະຈານໃຈລໍ້

ຕົວະຍົວະໂຍງຍັງເຍົ້າ ລວງເຂົາໃຫ້ຫລົງເຊື່ອ
ມຸສາເວວາດເວົ້າ ປະສົງເຂົ້າເຄື່ອງຂອງ
ເຣື້ອງນີ້ທຳໃຫ້ສິນສູນເສົ້າ ເໜົາໃນມູນເນົ່າ
ເຫດນັ້ນເຂົາຈິ່ງເວົ້າ ຈຳສິ້ນວ່າສິນ
ອັນທີ່ເປັນສິນແທ້ ທາງທັມພຸດໂທກ່າວ
ສິນນັ້ນຂາວສະອາດແທ້ ຫງມເທົ່າທໍ່ມະນີ
ບໍ່ແມ່ນສິນແປດເປື້ອນ ປາສະຈາກລາຄີ
ສິນນີ້ມີຄວາມສັດ ຊື່ຕົງຕາມເຣື້ອງ
ເປັນສິນເຣື່ອງເມື່ອໜ້າ ພາຕົນຕັ້ງທ່ຽງ
ບໍ່ແມ່ນສິນບ່ຽງລ້ຽວ ສິນສ້ຽວໃສ່ໃຜ
ສິນໄສເຫລື້ອມ ມະນີນິນລູກປະເສີດ
ເກີດກໍກີກຮາກເຫງົ້າ ເປັນເຄົ້າສາສະໜາ
ອັນໜຶ່ງເປັນຍາຍໍ່ເຍື້ອງແຈ້ງ ແຍງຫວນຫາເຫດ
ອັນນັ້ນກໍ່ແມ່ນສິນປະເສີດແທ້ ແປກະທູ້ສູ່ຟັງ
ອັນໜຶ່ງສັດທານັ້ນ ຄືກັນເປັນໝູ່
ເປັນຄູ່ສິນໜ່ວຍເຄົ້າ ພຣະອົງເຈົ້າວ່າງາມ
ສາມຢ່າງນີ້ ດີປະເສີດສົມນິກ
ໃຜຜູ້ຍໍເຍືອງແຍງ ທໍ່ກາຍພະກຽນຍ້ອງ
ຄົນນັ້ນເພິ່ນວ່າງາມເມື່ອໜ້າ ມໍຣະນາລະໂລກ
ວິໂຍກຍັງຍາກຫຍຸ້ງ ຍາມມ້ວຍແມ່ນບໍ່ມີ ເຈົ້າເຮີຍ
ອັນນີ້ ເຮົາຜູ້ຊຶກປຽບໃຫ້ ເຫັນທ່ອມປະຣະມັດ
ຈັດອອກເປັນກອນສອນ ສັ່ງຄອງຄຸນແກ້ວ
ສຸດຈະຣິດສາມໃຫ້ ຄະນິງໃນໂອ້ອ່າວນຳເນີ

ຢ່າຊິທຳທຍາບຊ້າ ພະກາຍພົ້ນໂພດປະມານ

ປານາ ເຈົ້າວ່າຂອງເຄີຍຂ້າ ຫາກິນການປະກອບ

ລ້ຽງອາຊີບຊອບຊົ້ນ ຄວາມນັ້ນກໍ່ຫາກດີ

ແຕ່ວ່າໃຫ້ເຈົ້າຄຶດຮອດແທ້ ໃຫ້ເບິ່ງແດ່ຢ່າລືມຫລິງ

ສິນທັມທານເທໝາຍ ໃຫ້ໝັ້ນຢາຍຢັງໄວ້

ຢ່າຊິໄປຫລິງຫລົ້ມ ງຶມງິວລັກຂອງທ່ານ

ລັກລອບຊີງລິ່ງເຂົ້າ ເຂົາເຈົ້າກໍບໍ່ດີ

ຍັງບໍ່ແລ້ວເລື້ອງນັ້ນ ກະສັນມັກເມັຍເຂົາ

ຜົວເພື່ອນແພງພັນຮັກ ຮໍ່ຕິນຕາມຕຸ້ມ

ໄປກຸມນຳແນວຮ້າຍ ຊິວາຍສິນເສັຍຊື່ ບໍ່ດີດາຍ

ກາຍະກັມສາມທ່ານວ່າໄວ້ ປະສິງໃຫ້ທ່ານຣະວັງ

ສ່ວນວ່າວາຈີນັ້ນ ສຳຄັນຄວາມປາກ

ສີ່ຂໍ້ແຂນຂອດໄວ້ ຣະວັງໃຫ້ຢ່າຈາ

ເຫັນແຕ່ໄດ້ວ່າເວົ້າ ບໍ່ເຂົ້າຮ່ອມຫາຫລັກ

ເວົ້າບໍ່ຈິງຈັງຄັກ ແມ່ນອນຢ່າມາເວົ້າ

ຄວາມສອງນັ້ນ ສຳຄັນຄວາມທຍາບ

ຢ່າຊິກຳຮາບຮ້າຍ ຂະຍາຍເຣື້ອງບາດໝາງ

ອັນໜຶ່ງ ມະໂນໄມນັ້ນ ຈາຈິງຈິ່ງປະກອບ

ໃຫ້ຣະນຶກຊອບແທ້ ເຫັນຫ້ອງທ່ອມທັມ

ຢ່າຊິຄຶດໂລບລ້ຽວ ກ້ຽວກ່າຍກາມກາຍແທ້ດາຍ

ຄືຢ່າໂລພານເພິ່ະ ໂພດຫຼາຍຊິຜາງຮ້າຍ

ຄວາມໂລບພາໃຫ້ເປັນແນວໜ້າ ພາກາຍລັກຂອງທ່ານ

ພາງານຈົນໃຫ້ປຸ້ນຂ້າເຈົ້າ ເອົາເຂົ້າເຄື່ອງຂອງ

ທຳອິດລັກແຕ່ຂອງເລັກນ້ອຍ ພອຍວ່າບໍ່ເປັນສັງ
ພາຍຫລັງຊໍ້າພັດແຮງທະວີໄວ ວ່າຜູ້ໃດບໍ່ມີຮູ້
ຈັກໜ່ອຍພັດວ່າກູເອົາມ່າ ນານມາພັດເອົາອີກ
ລັກໝາກເຂືອຂື້ນແຄ້ງ ແຕງເຕົ້າບົ້ວກະຫຼຽມ
ລັກຮອດເຂົ້າຢູ່ເລົ້າ ເອົາໃຫຍ່ບໍ່ມີຖອຍ
ຄອຍແຕໃກຕາເຂົາ ລັກເອົາບໍ່ມີໄວ້
ໂຫລດບໍ່ອາໄລຊໍ້າ ນຳບຸນນຳບາບ
ຄວາມທຍາບເກີດຈາກຄວາມຢາກໄດ້ ໃຈກ້າເກີດລັກຄວາຍ
ອັນນີ້ລ້ວນແຕ່ໂລບສິ້ນ ສິນບໍ່ກ່ຽວການເຖິງ
ອະທິນນາທາເນ ຢາກເບິ່ງເດບໍ່ມີພໍ້
ອັນນຶ່ງ ພະຍາປາໂຫນັ້ນ ກໍ່ສຳຄັນຄືວ່າ
ມີແຕ່ຄິດທຍາບຊ້າ ທາຂ້າຈອງເວນ
ເຫັນເຂົາດີເຂົາໄດ້ ພັດນຳໄປບັງບຽດ
ຄຽດໃຫ້ເຂົາຢ້ານແຕ່ມີລື່ນລົ້ນ ຕົນນັ້ນບໍ່ທໍ່ເຂົາ
ມີແຕ່ຄິດຈອງລ້າງ ມ້າງແປເປັນໄປ
ອັນໃດເຂົາຫາກພຽນເພິ່ງແພງ ແຕ່ງແປງປັນໄວ້
ເພິ່ນພັດໄປປອງຮ້າຍ ໄຟເຜົາສຸມຈູດ
ຄິດຕັດຮອນໃຫ້ໄຮ້ ຮາມສ້າງສິບສິນ
ນີ້ແລ້ວ ເຂົາວ່າເຫັນບ່ອນປາບົກບ້ອນ ພັດອອນຊອນເຊີຍປີບ ປ້າໂຫນ໋
ເທາະຮ່ອນທາຫ່ວນຟ້າວ ຮາມຮ້າວ່າຊິເອົາ
ຄາວເມື່ອປາບໍ່ຊິມເຊີຍບ້ອນ ພັດນອນດາຍດູເປົ໊າ
ແທກໍ່ບໍ່ໄດ້ເວົ້າ ມອງຮ້າກໍ່ບໍ່ຫາ
ເຫັນວ່າເຂົາມີເຂົ້າ ມີກິນມີຢູ່

ເຂົາມີ ກໍເພາະເຂົາຊ່າງສ້າງ ຫວັງຕຸ້ມຕ່ອມຜົນ
ຕົນບໍ່ມີພັດຄຽດແຄ້ນ ເຄື່ອງຄອບຄວາມຫິວ
ລ້າງຈອງໄປເຜົາຜານ ທ່ານບໍ່ຄວນຄືຮ້າຍ
ເຣື້ອງນີ້ເປັນຕາອາຍໜ້າ ທຳນາເທິງຂະໜ່ອມ ກັນນາ
ບໍ່ຄວນທຳຢ່າງນັ້ນ ມັນຊິກັງວກ່ງວໂຕ
ບໍ່ເປັນກັມຊາດນີ້ ຊາດໃໝ່ຊິນຳແຖມ
ກັມເກົ່າແນມນຳເຫັນ ສ່ວນຊິເປັນຄົນໄຮ້
ຊາດທີ່ເປັນຄົນສ້າງ ໂລກາກິງໂລກເຮົານີ້
ໃຜຂະຫຍັນໝັ່ນເລື້ອຍ ເລີ້ງລວັນກໍ່ສວ່ນມີ
ແຕ່ວ່າໃຫ້ລຶກເວັ້ນ ໄວ້ວ່າງທາງຜິດ
ຢ່າຊິເມົາມົວຄິດ ບໍ່ແມ່ນທາງຫຽວດັ້ນ
ຄວາມຂະຫຍັນກັບຄວາມຄ້ານ ແນມການມັນກໍ່ຕ່າງກັນດາຍ
ສ່ວນວ່າຄົນຂີ້ຄ້ານ ແນມບ້ານກໍ່ຕ່າງເຂົາ
ຄິດແນມໝູ່ເຈົ້າ ຊິເວົ້າວ່າຫາຄວາມ
ອັນນີ້ສໍ້ໃຫ້ເປັນພິຍານ ເຫດການເກີນຊິຮູ້
ຢູ່ເທິງຫຼາຍແຮງເຖົ້າ ໄວເຮົາພັດແຮງແກ່
ຈັກໜ່ອຍພັດວ່າແຮງເຖົ້າ ແນມເບິ່ງແຂ້ວພັດຫລ່ອນເສັຍ
ຜົມກໍ່ເຫຍີງຫຍອງຫຍຸ້ງ ຮຸງຮັງວາບໂວ່
ແນມເບິ່ງໂຕປານໝາກເຂືອຄື່ນຕົ້ມ ສີມຮ້າຍຮູບຜີ
ເອັນກໍຟູຜອກພົ້ນ ຂົນກໍຫລິ່ນໃນຕາ
ຍາມເມື່ອວາຈາສຽງ ຟ່າວຟັງບໍ່ມີແຈ້ງ
ປານນັ້ນເພິ່ນຍັງແອງຖະແລງເວົ້າ ຄວາມສະຫາວຫາຄູ່
ຫາໝູ່ນອມຜ່າງຂ້າງ ໃຫ້ສົມອ້າງແອ່ວໃຈ

ເຮັດຈັ່ງໃດບຸນຊິໄດ້ ໄກ່ຊິໄຂ່ຍັງມີຮັງ
ບຸນຊິຍັງກໍເພາະພຽນພຽງທຳ ພຳສະສົມໄວ້
ຖ້າວ່າໃຈບໍ່ໃສນຳແລ້ວ ແນວບຸນຊິບາງບົ່ມ
ສົນຊິສູນເຊື້ອມສິ້ນ ຊິກິນໜ້າທ່າຊິຫິວ
ບຸນຫາບໄວ້ ບາບຫົ້ວກໍ່ພໍໃດ
ເພາະບຸນຫຼາຍພໍຫາມ ຊ່ອຍກະຊາມຊູພົ້ນ
ເຕັມທີ່ຢ້ານແຕ່ບຸນໂຕນ້ອຍ ບໍ່ຄອງຄອຍຄວາມຊິຮຸ່ງ
ບາບນັ້ນສູງຂະໜາດກ້າ ບຸນຊິຊ້າຊັ່ງຊາໄດ້ບໍ ?
ທັມມະດາບຸນນີ້ ວາຣີປຸນປຽບ
ທຽບດັ່ງຄືແມ່ນ້ຳ ລຳທ້າງທົ່ວກະແສ
ສ່ວນວ່າແນວນາມນ້ຳ ນາມເປັນດັບມອດ ຈິ່ງແລ້ວ
ຖ້າແມ່ນນ້ຳນັ້ນນ້ອຍ ຊິພອຍສູ້ສຳໄຟໄດ້ບໍ ?
ຂ້ອຍຢ້ານແຮງຕົ່ມໜີ້ ສົນາດແນວຄະນອງນັ້ນຕິ
ໃຜຢາກລອງນຳຢຳ ໃຫ້ຢຳເນີໄຟຟ້າ
ລູກປືໂດເຫລັກກ້າ ຢ່າວອນຫາບໍ່ແມ່ນສ່ຽວ
ເບິ່ງມັນລ້ຽວໃສ່ໄມ້ ໃຜບໍ່ໃກ້ເບິ່ງເປັນ ເຈົ້າເອີຍ
ບາບນີ້ຕັ້ງວ່າລືຂະໜາດກ້າ ໃຜກໍ່ຊ່າອິດທິລິດ
ຄິດເບິ່ງແມ້ກຸມພັນ ຊ່າກັນໃຜກໍ່ຮູ້
ບໍ່ໄດ້ບຸນໄປຍູ້ ສົນໄຊຊິວາຍມອດ
ບຸນນັ້ນກອດຫໍ່ຫຸ້ມ ກວາມກຸມຈຶ່ງບໍ່ຕາຍ
ຊື່ວ່າບາບເຫລັກນອ້ຍ ກໍ່ຄວນກຽດເກງກົວ
ຊິບໍ່ຫົວຊານຳ ສຳເຊັ່ມຂອງນ້ອຍ
ຄວນຣະວັງມັນໄວ້ ຢ່າຈິ່ງໃຈຈາຍຽບ

ປຽບດັ່ງງູງອດໄມ້ ກະບານ້ອຍພິດຫຼາຍ
ບາບບໍ່ແມ່ນຂອງຢອກຫລິ້ນ ຊິດູໝິ່ນສາຣະພິດ
ຊື່ວ່າແນວນາມຫິດ ຕຸ່ມຄັນຄວນຢ້ານ
ແມ່ນຊິເປັນຂອງນ້ອຍ ໃຫ້ພອຍກົວເກງກ່ອນ
ຢ່າຊິຫລອນຢອກຫລິ້ນ ກິນແມ້ໝາກພິກເຂັມ
ບາບນີ້ບຸນປຽບໄວ້ ຫລາຍປະເພດພຶງນຶກ
ເໝືອນດັ່ງອັກຄີໄຟ ໝື່ນກືກອງຮ້າ
ນາມວ່າເປັນໄຟແລ້ວ ບໍ່ມີແນວຊິແລ້ງເປົ່າ
ມີແຕ່ຮ້ອນເຮົ້າໄໝ້ ໄຟໃຕ້ກະທູບທອມ
ອັນນັ້ນໄຟທູບນ້ອຍ ຝອຍອ່ອຍໃຫ້ເຫັນແຮງ
ແສງລຸກແດງລາມລີນ ລວກເຮົາໃຫ້ຣີມຮ້ອນ
ບໍ່ແມ່ນຂອງເຂົາລໍ້ ລໍເລີງຫລິ້ນງ່າຍ
ໃຜບາຍກໍ່ໄໝ້ມີຜູ້ນັ້ນ ຢ່າຝັນພໍ້ວ່າຊິເຢັນ
ນີ້ແລພວກເຮົາຄວນຫລີກເວັ້ນ ຢ່າເຫັນແກ່ຄວາມຫິວ
ຫລິງສະຄິວຄວາມມັກ ຊິໄໝ້ກາຍກອງຮ້ອນ
ຄວາມມັກຫວນຫາພໍ້ ພໍໃຈບໍ່ໄດ້ຮ່ຳ
ບໍ່ໄດ້ຄຳພຸ້ນພີ້ ດີຮ້າຍບໍ່ຮຸ່ງເຫັນ
ເປັນລີນທີ່ຫວນຫາໄວ້ ຄວາມດີໃຫ້ເປັນທີ່
ພາກັນໜີຫລີກເວັ້ນ ຄວາມຮ້າຍໃຫ້ຫ່າງໄກ
ຂຶ້ນຊື່ວ່າຄວາມໂທດຮ້າຍ ໄຟໃຫຍ່ໃຫ້ເກງຂາມ
ຢ່າຊິຕາມທາງຫຽວ ທ່ຽວໄປຊິເປັນຮ້າຍ
ໃຫ້ຣີບສະລີມສ້າງ ທາງບຸນໃຫ້ເປັນເພື່ອນ
ບຸນນັ້ນເປັນພວກເພື້ອນ ເຕືອນເຈົ້າເຂົ້າໃສ່ທາງ

ບຸນນີ້ແມ່ນບໍ່ວາງເຮົາໄດ້ ນຳໄປທຸກບາດຍ່າງ
ຕ່າງແຕ່ວ່າບາບນັ້ນຫຼາຍບຸນນັ້ນນ້ອຍ ພ່ອຍບໍ່ແພ້ພວກກັມ
ຖ້າວ່າບຸນມາກລິ້ນ ຜົນແຜ່ຜະຫລະຫລາຍ
ບາບເລີຍກາຍເກີນຫນີ ຫ່າງກາຍກອຍພົ້ນ
ປຽບດັ່ງເຮົາເອົາກ້ອນ ຫີນທອງທັງແທ່ງ
ແກວ່ງພ້ອມໃນຫນາກງິ້ວ ປີ້ວພົ້ງຟາດໄປ
ສ່ວນວ່າຫີນຫນັກຫນ້າ ຊິຕົກມາຮອດກ່ອນ
ເພາະຫີນເປັນຂອງຫນັກກວ່າຍອງນຸ່ນງິ້ວ ປີ້ວຊ້າວ່າບໍ່ໄວ ທ່ານເອີຍ
ຟັງເຢີພວກແມ່ນປ້າ ຄະນາຍາດອາວອາກໍ່
ໃຫ້ຮີບທຳພຽນອິດ ກໍ່ປຸນແປງປັ້ນ
ຢ່າຊິປັ້ນແປງປ້ອນ ຄອນຄວາມຄຳຄຽດ
ບັງບຽດເພີ່ນເພີ້ນບ້ານ ໃຫ້ເຂົາຕ້ານວ່າຂະໂມຍ
ຄວນທີ່ຊັກເງື່ອນເຫງົ້າ ເຖົ້າເກົ່າປາງປະຖົມ
ຊີ້ສ່ອງທາງທ່ຽວລັດ ໃຫ້ເລັ່ງເລວພະລັນພົ້ນ
ຄວາມໃດມັນຫາກເປັນທາງເສົ້າ ໃຫ້ສອນເຂົາຢ່າໃຫ້ຢ່າງ
ເປັນທາງເວວາດເວົ້ງ ເຫີງພົ້ນເພື່ອນບໍ່ຫຽວ
ທາງນັ້ນເຂົາວ່າເປັນທາງຊ້າ ມໍລະຄາຄາວແຄບ
ທາງລັກຕິວະລິ່ວລໍ້ ໃຫ້ລໍໄວ້ຢ່າຊິໄປ
ກັບທັງການກິນຫລິ້ນ ຜົນໂປໄພທົ່ວ
ຂໍໃຫ້ກົວຢ່າໃກ້ ລະວັງໄວ້ຢ່າຊິບາຍ
ເພາະວ່າເປັນອັບປະມົງຄົນແທ້ ບໍ່ຄວນແສເຊົ້າໃສ່
ມັນເປັນໄພພຣະຫ້າມ ປາມໄວ້ວ່າບໍ່ດີ
ແມ່ນວ່າໃຜຫາກຍັງດື້ດ້ານ ແອບອ່ານຮຽນເອົາ ດັ່ງນັ້ນ

ບໍ່ນານວັນຈັກຈົບທາຍ ຊິໝ່າຍໂຕພາຍທ້າຍ
ເຫດນີ້ທັມສະແດງໄວ້ ໃນຄອງຄາຣະວາດ
ນັກປາດຮູ້ຮູ່ງຂໍ້ ເຫັນພໍ້ທ່ານຈິ່ງສອນ ເຈົ້າເຮີຍ
ເຊີນເຢີ້ພວກພີ່ນ້ອງ ປະຊາຊາດຊາວລາວ
ຂໍໃຫ້ວິຈານຈິ່ງ ຈື່ຈຳນຳໄວ້
ຢ່າໄດ້ຫລົງໄຫລເພ ເພີຄວາມຄຳສັ່ງ
ຟັງແລ້ວຢ່າໄດ້ ໄລລະຖິ້ມ ຖະນອມປ້ອງໄຕ່ຕອງ ຫັ້ນທອ້ນ
ປະຣິໂຍສານສິ້ນ ຄຳກອນການຊິກ່າວ
ແລ້ວທໍ່ນີ້ ຍໍໄວ້ວາງຄວນ ທ່ານເຮີຍ

ຈົບຄຳກອນ

---

# ກາບຄຳສອນ

ໂດຍ. ພຣະຫລັກຄຳຈຳປາສັກນັກຄະຣາຈານ ( ເຄນ ທະນາກອນ )

ນະໂມນະມາວັນທຳນານອບນ້ອມ ໃຫວ້ທຸກຍ່ອມຄຸນແກ້ວທັງສາມ
ຄຸນຄວາມງາມບິດາພໍ່ແມ່ ຄຸນເຖົ້າແກ່ຄູບາອາຈານ
ບຸນສົມພານມີມາບໍ່ນ້ອຍ ຂ້ອຍຈັກໄຫວ້ຍໍໄວ້ເໜືອສຽນ
ເປັນບົດຮຽນຂອງຫລານຜູ້ແຕ່ງ ຄິດແຈກແບ່ງເປັນກາບກອນສອນ
ເປັນກາບກອນສອນຄົນທຸກເພດ ແມ່ນຜິດເອກສະຣະໂທຕີ
ຫລານຍິນດີຕິຊົມທຸກທ່າ ແຕ່ຢ່າດ່າປ້ອຍແຂ່ງຊັງກັນ
ປັນບົດຄວາມຄາຣົມບໍ່ເກັ້ງ ຂໍນ້ອມເນັ້ງຍອມໄວ້ແຕ່ໃກ

ຕາມວິໄສຜູ້ບໍ່ສະຫລາດ ພວກນັກປາດເຫັນແລ້ວຢ່າຕຽນ
ເຮົາພວມຮຽນຫັດແຕ້ມຫັດແຕ່ງ ຫັດທຸກແຫ່ງທີ່ຄະຣັດສະ
ທັງວາຈາຄວາມສູງຄວາມຕ່ຳ ພວມຮຽນຮ່ຳຄວາມຮູ້ວິຊາ
ເພາະວ່າເຮົາເກີດມາເປັນຄົນນຳໝູ່ ເມື່ອເຮົາຢູ່ໃຫ້ເຂົາໄວ້ອາໄລ
ເມື່ອເຮົາໄປໃຫ້ເຂົາຈົ່ມຄິດຮອດ ຕາເຮົາບອດຢ່າຖຽງຜູ້ຈູງ
ບຸງບໍ່ເຕັມຢ່າຖິ້ມກະຕ່າ ເຂົ້າໄປປ່າຢ່າວອນຫາເສືອ
ເຮືອເຮົາມີຢ່າລືມສາຍໂສ້ ແນວພ້າໂຕ້ຢ່າກິ່ນໂພນດິນ
ແນວກິນດີ ຢ່າແພງເມືອໜ້າ ຜູ້ເຂົາກ້າເຂົາຢາກກວນກິນ
ແນວນາມຂວານຟັນດິນທ່ານຫ້າມ ເມື່ອອາບນ້ຳຢ່າຖ່າຍອາຈົມ
ຢ່າຊິຫລິ້ນຂອງຄົມນອນຫງາຍຖອດດາບ ຢ່າຊິໄປກຳຮາບນາບດ່າຄົນເມົາ
ແນວນາມເລົ່າບໍ່ຫວານຄືອ້ອຍ ແນວເດັກນ້ອຍຢ່າຂົ່ມເອົາໜັກ
ຢ່າຊິບັກຕົ້ນໄມ້ກິນໝາກ ແນວນາມສາກຢ່າເຮັດດ້າມສຽມ
ອີ່ມແລະນຽມຂອງຫອມແຕ່ເກີດ ຜູ້ປະເສີດຢ່າເວົ້າດູແຄວນ
ແນວເປັນແຫວນຢ່າສຸບນິ້ວໂປ້ ຢ່າອວດໂກ້ກາງບ່ອນປະຊຸມ
ກາຍໂຕມຸມຢ່າດ່າຂີ້ເຖົ່າ ແນວຊີ້ນເນົ່າຢ່າເອົາມາກິນ
ຊຸບແລະສົບໃນດິນບໍ່ໄຮ້ ໃຜຄິດໄດ້ພໍຢູ່ພໍກິນ
ນ້ຳແລະດິນຢ່າປ້ອຍຢ່າດ່າ ຍາມຕົກກ້າຢ່າຫລິ້ນດູດາຍ
ກາຍເດືອນໄປບໍ່ງາມຄືໝູ່ ຄົນສ່ຳປູ່ຢ່າເອີ້ນສະຫາຍ
ເຫັນເຂົາຕາຍຢ່າໄປຫງຳເງືອດ ນ້ຳພວມເດືອດຢ່າເອົາມືຄົນ
ເຫັນເຂົາຈົນຢ່າໄປດູໝິ່ນ ໄປຕ່າງຖິ່ນໃຫ້ຈື່ຫົນທາງ
ເຫັນຂຸນນາງໃຫ້ຍໍມືໄຫວ້ ຂື້ນຕົ້ນໄມ້ສຸບເກີບບໍ່ຄວນ
ພ້າແລະຂວານໃຫ້ຄົມທຸກເມື່ອ ສາດແລະເສື່ອໃຫ້ຕາກຍາມຫວາງ
ຄຸແລະຄານຢ່າຖິ້ມຂີນຂວ່າຍ ເມື່ອກິນກ້ວຍເປືອກຖິ້ມແວນໄກ

ໄຟໃນເຮືອນໝັ່ນແນມໝັ່ນເບິ່ງ ຫຽວທາງເວົ້າໃຫ້ເບິ່ງນ້ຳກິນ
ຕີນບໍ່ເຖິງຢ່າຫ້າໃສ່ນ້ຳ ໄມ້ຈີ່ງຂ້າມຄືນລື້ມຢ່າປີນ
ຜ້າເສັດຕີນຢ່າເອົາປູບ່ອນ ໄຟພວມຮ້ອນຢ່າໃສ່ຂີ້ຝອຍ
ເຫັນທົວກອຍຢ່າໄປປະໜາດ ຍາມໃສ່ບາດສຸບເກີບບໍ່ຄວນ
ຢ່າຊິລວນນຳຊ້າງໂຕຖ່ອຍ ຢ່າຊິຍິວະເດັກນ້ອຍຕີບຕອຍຕີກັນ
ແນວຂອງມັນກິນຫຼາຍແພ້ທ້ອງ ຢ່າຊິຮ້ອງຍາມເມື່ອສະຫງັດ
ຢ່າປັດຜົມຕໍ່ໜ້າຜູ້ໃຫຍ່ ຢ່າຊິໃສ່ໝວກເຂົ້າອາຮາມ
ເຂົ້າໄປຖາມຢ່າເໝັບດອກໄມ ບຸນບໍ່ໄດ້ຂຶນບາບໃສ່ໂຕ
ຢ່າຊິໂສເຣື້ອງປຸ້ນເຣື້ອງລັກ ຄວາມບໍ່ຄັກເວົ້າກ່ອນບໍ່ຄວນ
ຍາມໄປສວນໃຫ້ເບິ່ງຂອງປູກ ເຫັນຫຍ້າຂຶ້ນໃຫ້ຖາກໃຫ້ຖາງ
ຈົກຄົມບາງຢ່າເອົາຖາກໄມ້ ຍາມໂຕໄຂ້ຢ່າຮ້າຍໝໍຢາ
ຢ່ານິນທາໝໍຢາບໍ່ແມ່ນ ແນວດິນແກ່ນຢ່າເອົາໄມ້ຊຸດ
ດົ້ນໄຟສຸດຢ່າເອົາເຮັດຄ້ອນ ຮອດໜ້າຮ້ອນຢ່າປູກໝາກເຂືອ
ຍາມລົງເຮືອຢ່າວອນຫາເງືອກ ເຊືອກໂຕສັ້ນຢ່າໃສ່ຄັນແຂງ
ແຮງບໍ່ຫລາຍຢ່າໄປຊື້ຊ້າງ ຢ່າຊິສ້າງຄວາມຮ້າຍໃສ່ໂຕ
ກາຍໂຕໂຊກິນຂອງເບິ່ງແດ່ ພໍ່ແລະແມ່ຄວນໄຫວ້ຢຳເກງ
ຄົນນັກເລັງຢ່າໄປຫາຄົບ ເຮົາຄວນນົບນອບແກ້ວທັງສາມ
ສິ່ງບໍ່ງາມຢ່າຫວນຫາເຮັດ ຢ່າກ່າວເທັດອອກດ້ວຍວາຈາ
ຄວາມມຸສາພາກັນຫລີກເວັ້ນ ສິ່ງເຊັ່ນເລັ່ນຢ່າແອບອີງເອົາ
ເຄົາບໍ່ດີຫວນຫາເຊື້ອກຄ້ອງ ອ້ອງບໍ່ແໜ້ນຢ່າໃສ່ຄໍຄວາຍ
ໂຕບໍ່ລວຍຢ່າເຜືອນຫາໃຫຍ່ ເຊື້ອລູກໄພ່ຄວນໃຫ້ຈຽມຕົວ
ແກງບໍ່ນົວຢ່າເອົານ້ຳຕື່ມ ແນວເຫລັກຫລົ້ມຊູບເລື້ອຍແຮງເລວ
ແນວເຫລັກແຂງແຮງກ້າແຮງກັ່ນ ແນວຄົນໝັ່ນນອນຢູ່ບໍ່ເປັນ

ແນວນາມເຫງັນຫາກິນກາງຄ່ຳ ແນວເຂົ້າກ່ຳຊ້ອມໄດ້ບໍ່ຂາວ
ເຊື້ອໝາກນາວບໍ່ຫວານຕ້ອງສົ້ມ ແນວເຂົ້າຕົ້ມມີກ້ວຍຢູ່ໃຈ
ຜັກສິ່ງໃດກິນກັບປ່າຈ່ອມ ເອາະ ແລະ ອ່ອມເຂົ້າຈ້ຳຈັ່ງດີ
ຄຸຂີ້ຊີຂ້ຽນນ້ຳເໝັນຂື່ນ ຫຼວຫາງໝິ່ນຢ່າງໃຫ້ຫຍຸມຕີນ
ຍາມຝົນລິນຢ່າຕາກຜ້າຫົ່ມ ເຂົ້າພວມກິ້ນຢ່າໃຫ້ງົວກັດ
ດັ່ງເປັນຫວັດຢ່າດົມດອກໄມ້ ໂຕເປັນໄຂ້ຕາກແດດບໍ່ດີ
ກາຍອິນຊີຂອງຕົນໜັກຕື່ມ ແນວຂອງດື່ມນ້ຳເຫລົ້າຜິດສິນ
ຂອງບໍ່ເປັນຕາກິນຢ່າກິນດີກວ່າ ແນວເຮືອຮົ່ວຕ້ອງຢາຂີ້ຊີ
ໂຕຢູ່ດີຢ່າໄປຫາເຣື່ອງ ເຂົາບໍ່ເອີ້ນໂຕຢ່າຊິຂານ
ເຂົາບໍ່ວານໂຕຢ່າຊິຊ່ວຍ ເຫັນຊູ້ທ່ານຢ່າເວົ້າຊຳເຊີຍ
ເຫັນເມັຍທ່ານຢ່າເຂົ້ານັ່ງໃກ້ ເປັນໄພ້ທ່ານຄວນເວົ້າມ່ວນຫູ
ຢ່າໄປດູເຂົາຂ້ຽນຄົນໂທດ ຢ່າຊິໂກດຍາມເມື່ອຕອນພາ
ຢ່າຊິຈາຍາມເຂົ້າບ່ອນຢູ່ ຄົນສ່ຳປູ່ໂຄຣິບຢຳແຢງ
ແຮງບໍ່ຫຼາຍຢ່າໄດ້ມັກໂລບ ຢ່າຊິໂຄບຕາຊັ່ງຕາຍອຍ
ຢ່າຊິຄອຍຫາໂຊກຫາລາບ ສິ່ງເປັນບາບຢ່າໄດ້ພາງານ
ແນວນ້ຳຕານບໍ່ຂີວຂົມຂື່ນ ຂອງຄົນອື່ນຢ່າໄດ້ບາຍເອົາ
ຢ່າໄປເຊົາບ່ອນເພີ່ນຫວງຫ້າມ ຢ່າພ້າວຂ້າມຍາມເກີດລົມຟອງ
ຢ່າເອົາຈອງມາຊິດຕາງບ່ວງ ຢ່າປ່ວງເຕັ້ນຂ້າມໂສກເຫວຊັນ
ບ່ອນບໍ່ຄັນໄປເກົາຜິດຣິດ ເຣົາຕ້ອງຫລີກຜູ້ຫາມຂອງໜັກ
ຢ່າສັກຫລັກຕັນທາງຄົນທ່ອງ ບ່ອນເປັນຮ່ອງບວກນ້ຳວັງປາ
ຢ່າໄປສະເອົາປາບໍ່ແມ່ນ ບ່ອນດິນແກ່ນຢ່າເອົາເຮັດນາ
ບ່ອນປ່າໜາພາຫັນເຮັດໄຮ່ ຕົ້ນໄມ້ໃຫຍ່ຫວງຫ້າມຢ່າຟັນ
ບ່ອນສຳຄັນຄືພູມເຈົ້າທີ່ ຢ່າມວນມີ່ຖິ້ມຄອນໂບຍຕີ

ບ່ອນມີສີເຮົາຄວນນ້ອມໄຫວ້ ຢ່າຂຶ້ນໄມ້ວັນພຣະວັນສິນ
ຮອດຍາມກິນຢ່າເຝືອນຫາຄ່ຳ ຢ່າໃດ້ນ້ຳຄວາມເກົ່າຜິດຫູ
ເຮົາມີໝູຢ່າປ່ອຍກາງກາດ ເຮົາມີມ້າຢ່າລະເມີນມັນ
ວັນ ແລະ ຄືນກິນເຮົາເຖົ້າແກ່ ພໍ່ແລະແມ່ໃຫ້ສັ່ງສອນຫລານ
ເປັນແມ່ມານໃຫ້ຈຽມທຸກທ່າ ເມື່ອເຂົ້າປ່າຖືພ້ານຳແຝງ
ຕາເວັນແດງຢ່າເບືອນຫາຫ່ຽວ ຢ່າແຮກສ່ຽວກັບຄົນໃຈດຳ
ຢ່າໄປຄຳຂາຄົນຂີ້ທູດ ເຂົ້າໜຶ້ງບູດຢ່າເອົາມາກິນ
ຊັບໃນດິນຫາເອົາບໍ່ງ່າຍ ຍາມຈັບຈ່າຍໃຫ້ເບິ່ງພໍດີ
ໂຕບໍ່ມີໃຊ້ຫຼາຍກວ່າໄດ້ ບາດທຸກໄຮ້ເຂັນຂາດໂພຄາ
ໄປຄົວຫາທາງໃດກໍຍາກ ມັນລຳບາກປາກທ້ອງບໍ່ເຕັມ
ເກືອຂອງເຄັມຖືກນ້ຳຍັງຈືດ ໂຕຄົນຝືດຄວນໃຊ້ຕາມແຮງ
ໂຕບໍ່ແຂງຢ່າໄດ້ສັນໂດດ ຢ່າເຮັດໂພດລື່ນດ້ານພໍງາມ
ຄວາມບໍ່ດີເມທີບໍ່ຍ້ອງ ຄວາມຖືກຕ້ອງນັກປາດເຊີຍຊົມ
ຄົນເປັນເຂີຍໃຫ້ຈຽມພໍ່ເຖົ້າ ຢ່າຢືນເວົ້າເຖົ້ານັ່ງບໍ່ຄວນ
ຢ່າໄດ້ເລລວນຫລີ້ນໄພ້ຫລີ້ນໂບກ ເມື່ອບໍ່ໂຊກຈິບຫາຍເງິນທອງ
ຂອງໃນເຮືອນຂາຍກິນໄປເປົ່າ ມູນແຕ່ເກົ່າພໍ່ແມ່ໄປປັນ
ການພະນັນມັນກິນບໍ່ບອກ ປອກຮອດຊີ້ນກະດູກທັງເອັນ
ຕາຍບໍ່ເປັນຍັງເອັນຕໍ່ໄວ້ ປາດຈິ່ງໄດ້ເອີ້ນວ່າອະບາຍ
ບາດວ່າ ເຮົາມີຫຼາຍໃຫ້ທານໄປແດ່ ຍາມເພິ່ນແຜ່ສ້າງສ່ວນກຸສົນ
ຢ່າເປັນຄົນຖະໜອມຖະໜີ່ ເມົາແຕ່ຖີ່ບໍ່ເຮັດກອງບຸນ
ຄຸນບໍ່ມີຕິດໂຕເມືອໜ້າ ສະຫວັນຟ້າຢ່າອ່າວຄອງຫາ
ເທວະດາເພິ່ນແລທລິງລ່ຳ ຮອດຍາມຄ່ຳໄຫ້ວພຣະວອນຫາ
ຄຸນເທວາໃຫ້ມາຊູຊ່ວຍ ໄຫວ້ເທື່ອນ້ອຍຫຼາຍເທື່ອຍັງດີ

ຈັກເປັນສິຂອງເຮົາເມືອໜ້າ ຢ່າໃຫ້ຊ້າເຄີກທ່າງປີເດືອນ
ໃຫ້ເຕືອນໃຈຮາເຮົາເຈົ້າຂ້ອຍ ບໍ່ເຖິງຮ້ອຍອາຍຸສັງຂານ
ໃຫ້ຮູ້ຈັກປະມານເປັນຄົນຄືໝູ່ ເມື່ອເຮົາຢູ່ຕ້ອງໃຫ້ມີໄຊ
ເມື່ອເຮົາໄປຕ້ອງໃຫ້ມີໂຊກ ຢູ່ໃນໂລກຢ່າໃຫ້ເຂົາຕິ
ມັນບໍ່ດີອັບປີໄປເປົ່າ ເຊື້ອນົກເຈົ່າບິນຂຶ້ນຈີ່ງຂາວ
ໃຈໃຫ້ຍາວຢ່າເຫັນແກ່ສັ້ນ ທ້າໝູ່ບ້ານຫາໄດ້ຊາວຄົນ
ຄົນລາຍໃນລາຍເສືອລາຍນອກ ເພິ່ນສອນບອກໃຫ້ຈື່ຈຳເອົາ
ເມົາແຕ່ນອນບໍ່ຮູ້ເມື່ອຕື່ນ ຄົນຊາດອື່ນເຂົາຢ່າງກາຍເຮົາ
ເຂົາກໍກິນອາຫານຄືກັນທຸກເພດ ປານນັ້ນ ເຂົາເປັນເອກ ພວກເຮົາເປັນຕີ
ມັນຈັ່ງບໍ່ມີສິຕິດຕົວຢູ່ເປົ່າ ລາວເຮົາ ເຄີຍໄດ້ເປັນຊາດເກົ່າແຕ່ດຶກດຳບັນ
ຫຼາຍພັນປີເກີດມາໃນໂລກ ເຊີນພີ່ນ້ອງຍົກເລີກຄວາມຄ້ານໄລລາ
ເຮົາຮີບພາຫລານເຫລັນດຸຫມັ່ນ ຮີບບາກບັ່ນທຳຮ່າງສ້າງຕົວ
ຢ່າໄປມົວຫາກິນຫາຫລິ້ນ ແນວຕ່ອນຊີ້ນຖິ້ມໄວ້ມັນລາ
ປູແລະປາຖິ້ມໄວ້ມັນເນົ່າ ແນວຂອງເກົ່າບໍ່ໃຊ້ມັນເສັຍ
ຜົວແລະເມັຍຮາມກັນບໍ່ຊື່ນ ມື້ອື່ນເລື້ອຍເຖິງມື້ບໍ່ທຳ
ຄຳເບິ່ງວັນທຍັບໄປຄະຄຽນ ວຽກບໍ່ລ່ຽນຜັດມື້ວັນຍາມ
ກາຍເວລາປີເດືອນບໍ່ຖ້າ ຮອດມື້ໜ້າຊ້ຳວ່າມື້ຮື
ມືບໍ່ບາຍປາກເວົ້າມັນງ່າຍ ເປັນຕາໜ່າຍຕົວະໂຕຕົນເອງ
ເຮົາຄວນເກງຜັດເຊົ້າຜັດຄ່ຳ ວັນແທ່ງໜ່ຳຖອຍໄປເປັນເດືອນ
ປີເພື່ອນເຕືອນຮາເຮົາຮອດແລ້ວ ຍັງບໍ່ແລ້ວເຕືອນຮອດເກສາ
ເຖິງກາຍາຫູຕາໜັງຫ່ຽວ ປານນັ້ນຍັງບໍ່ກ່ຽວການສ້າງສົມສົນ
ນັບວ່າມີມົນທົນໃນຕົວບໍ່ນ້ອຍ ບໍ່ວ່າ ເຈົ້າແລະຂ້ອຍດ້າມກັ່ນສັນດຽວ
ເຮົາຄວນຫຽວເຂົ້າຫາທາງແມ່ນ ມັນຈັ່ງຊິແລ່ນທັນກົ້ນຂອງເຂົາ

ຢ່າຊິຕື່ນເຖິດອ້າຍນ້ອງ		ປ້ອງກັນເຂົ້າສ້າງຢູ່ທຳກິນ
ເຮັດໃຫ້ຖືກຕາມສິນຢ່າລັກຢ່າສໍ້		ຢ່າຫຼົງມຫຍໍ້ຂົ່ມເພິ່ນຍໍໂຕ
ໃຜໄດ້ດີຍັງພໍຂາບໃຫວ້		ໃຜຂີ້ຮ້າຍຊິດຊ່ວຍຊູກັນ
ປັນກັນກິນຢ່າຫວງຢ່າຫ້າມ		ເຂົ້າແລະນ້ຳຂອງລ້ຽງອິນຊີ
ຄວນໃຫ້ມີໃສ່ສາງຢ່າຂາດ		ໃຫ້ສະຫລາດການສ້າງການແປງ
ຢ່າຊິຢ້ານເສັຍແຮງຕັ້ງໃຈເດັດດ່ຽວ		ຢ່າຊິເປັນຄືກ່ຽວໂງ່ໜ້າໂງ່ຫລັງ
ເຮັດອັນໃດໃຫ້ມັນດີມີຊື່		ໃຫ້ເຂົາຈື່ຈຳໜ້າລືຊາ
ແມ່ນທຳນາໃຫ້ໄດ້ຂາຍເຂົ້າ		ຢ່າເວົ້າເຂົາເຮັດພໍກິນ
ດິນຍັງຫຼາຍນາຍເຮົາບໍ່ຫ້າມ		ວັງບວກນ້ຳລ້ວນແຕ່ເປັນເງິນ
ເຊີນພາກັນເບິ່ງສາແດ່		ເຮັດແທ້ໆຢ່າທໍ້ຢ່າຖອຍ
ຢ່າຊິເຮັດມອງໆມາງໆແຍ້ມໆ		ຄັນຊິແຕ້ມໆ ໃຫ້ຈຳບັກ
ໃຫ້ຫລັກໃຈໂຕເອງດີກວ່າ		ຢ່າຄິດຊົ່ວຫລັກເອົາຂອງເຂົາ
ຫລັກເອົາດິນເອົາດອນບ່ອນບ້ານ		ເປັນໜ້າຢ້ານບາບໄລ່ນຳທັນ
ກຳນຳເຖິງບໍ່ເຫິງເຫັນງ່າຍ		ເປັນໜ້າໜ່າຍເກີດເວທະນາ
ຝູງອາວອາລູງຕາພີ່ນ້ອງ		ຢ່າກ່ຽວຂ້ອງນຳຊັບຂອງເຂົາ
ພາກັນເຊົາເລີກຈາກຄວາມຊົ່ວ		ຢ່າຊິກົ້ວນຳບາບບໍ່ງາມ
ຕາມອາຈານບອກມາໃຫ້ເລີກ		ຕັ້ງແຕ່ນີ້ເມື່ອໜ້າຈື່ຈຳ ແທ້ເນີ.

( ຈົບ )

# ນ້ຳຕາແມ່

ໂດຍ : ດຣ. ທອງຄຳ ອ່ອນມະນີສອນ

➤ ລູກເອີຍ! ສຸດແມ່ກັ້ນເກື່ອນນ້ຳ ຕາໂສກລົງອີກ ເຕັມທີ
ມັນທາກນອງຫລາມໄຫລ ຫລັ່ງລົງລິນແກ້ມ
ໃຈແມ່ເໝືອນໄຟຈີ້ ເຜົາລົນລາມລວກ
ຂະໜອງມອດໄຫມ້ ຮົມຮ້ອນຫ່ວງນຳ ເຈົ້າແລ້ວ

➤ ຄຶດເມື່ອແມ່ໂອບອູ້ມ ຖະໜອມຈູບຈອມຂ້ວນ ແດ່ເດ
ເຊົ້າຄ່ຳຄືນປະຄອງຄີງ ພີ່ງແພພຽນຕູ້ມ
ມົດໄຕ່ຕ່ອມປັດປ້າຍ ຍຸງກາຍແມ່ກຸມໄລ່
ຍາມລູກແອແອ່ວໄຫ້ ໃຈຄ້ານຄຶດອີດູ.

➤ ປາກແມ່ດື່ມນ້ຳຮ້ອນ ນອນນັ່ງບໍ່ເປັນສຸກ ຍາມນັ້ນ
ທ້ອງເປື່ອຍໂພງໄຟລຸກ ລວກລົມຫາຍແປ້ວ
ກິນແຕ່ຂີງກັບເຂົ້າ ເກືອກອຍແກມຂ່າ
ໂຕແມ່ເຫລືອງຫລ່າເສົ້າ ຜອມລ້າຈ່ອຍໂຊ.

➤ ອິດສາລ້ຽງລ່ຳເຈົ້າ ຈົນໃຫ່ຍສອນສູງ ເຈົ້າເອີຍ
ຈຶ່ງຄ່ອຍເບີຍເບົາອີກ ແບ່ງບານສະບາຍໄດ້
ບາດມ່ອມເນົາໃນທ້ອງ ວັງວຽງໂລດລື່ມແມ່
ປ້ອຍດ່າດັນໄລ່ຂ້າ ຄຳສິ້ມສຽດປະນາມ ແມ່ນໍ

➤ ແມ່ນີ້ຄືນເຮີະຮ້າຍ ຍາຍຂະມອດຈອນຈົນ ຈຶ່ງແລ້ວ

ຜ້າແພ່ນແພດຸດຳ ສາບຄາວຄືແຮ້ງ
ເສື້ອຂາດຫຼັງຫຍິບຍຸ້ມ ເປັນວິງເວີງຕາບ
ສິ້ນດ່າງດຳແປດເປື້ອນ ລະອອງຟ້າຝຸ່ນດິນ.
ບໍ່ລືມເຮືອນສີ່ຊັ້ນ ອອກແບບທັນສະໄໝ ລູກແລ້ວ
ບໍ່ຄູ່ຄວນຂອງທິບ ເຄື່ອງຄຳຄຽນເນື້ອ
ຍິງຜ່າດົງດອນເຮື້ອ ຄືນໄພພົງເຖື່ອນ ຄືແມ່
ລືມແຕ່ເນົາດ່ານດ້າວ ແດນຖໍ້າຖິ່ນທະນີ.
➤ ລືມແລ້ວບໍລູກຫລ້າ ກະຕູບຕ່ຳຕອງມຸງ ເຮົານັ້ນ
ບ່ອນລູກເຄີຍຄຽງໝອນ ແນບນອນບໍ່ມີມູ້ງ
ພໍ່ເຈົ້າໄລລາຮ້າງ ຮາມດິນຕາຍຈາກ ປາງນັ້ນ
ຍັງແຕ່ແມ່ຢູ່ເຝົ້າ ແຝງຕູ້ມຕໍ່ມາ ລູກເອີຍ
➤ ເຊົ້າຄ່ຳຂາຍເຂົ້າປຸ້ນ ຫິ້ວຫາບຕາມຖະໜົນ
ໄດ້ມີ້ສິບຊາວອັດ ແມ່ກະພຽນແພງໄວ້
ເພື່ອເປັນທຶນຮຽນຮູ້ ຂອງອວນອິງລູກ
ບັດນີ້ເຈົ້າເລີກລ້າງ ລືມໄດ້ບໍ່ອີດິນ ແມ່ບໍ?.

# ເມດຕາເປັນມະຫາສະເໜ.

ດຣ. ທອງຄຳ ອ່ອນມະນີສອນ

➤ ເມດຕາຄືໜ່ວຍແກ້ວ
ຄວນທີ່ພຽນແພງຮັກ
ຍໍຍົກເປັນຂັນແກ້ວ
ນ້ອມນຶກແສງສິ່ງເຂົ້າ
➤ ເມດຕາເໝືອນຢາດນ້ຳ
ໄຫລຫລໍ່ລິນປະທັບ
ແຊ້ມຊື່ນເບີຍບານແຍ້ມ
ໂອຍອ່ອນຈິດເຈດເຫລື້ອມ
➤ ເມດຕາເປັນຢາແກ້
ແກ້ເກື້ອຍປົວດີຄັກ
ສາມາດທຳລາຍສັ່ງ
ນຳໄລ່ນຳເຂັ່ນຂ້າ
➤ ເມດຕາຄືເວດແຄ້ວ
ຄືຄູ່ມີມົນຂັງ
ຊ້ອຍສິ່ງແຝງສອນຈຳ້
ຄົນອື່ນພໍເຫລືອດພໍ້
➤ ໃຜເຫັນຈິດເຈດຄອັຍ
ຕິດຕໍ່ເປັນສາຂາ
ຄວນຄິດຫວນເຫັນໜ້າ

ໃນຍະເມດຕາຕົນ
ທີ່ຮຸມຮຽງໄວ້
ຫຽນທອງເທິງເກດ
ເຍືອງແຈ້ງແກ່ນໃຈ
ໃສສະອາດກາງອົກ
ເລື່ອນລອຍລຽນລ້ອມ
ສະບາຍບານເບົາໂສກ
ອິດູເພື່ອນເຜົ່າດຽວ.
ມະເຮັງກໍ່ກິນໃຈ ທ່ານແລ້ວ
ພະຍາດໃນແນວນີ້
ສູນພັນວາຍວອດ
ໃຫ້ຫາຍຮ້ອນຢູ່ເຢັນ ແທ້ແລ້ວ
ສະເໜແນບນຳໂຕ
ເປົ່າຮວຍຮິງໄວ້
ທະນູແຍງຍິງໃສ່
ກະສັນເອົ້າອັ່ງໃນ ແນ່ແລ້ວ
ຄະນຶງຮອດໂຮມຮັກ
ເຜົ່າພົງພັນເຊື້ອ
ວັນຄືນຝັນກ່ຽວ

ພໍອີກມອບຮ່າງໃຫ້ ພຽນແຕ້ມແຕ່ງຕາມ ທ່ານເອີຍ.

➤ ຄັນໝ່ອມອີມອ່ານແລ້ວ ກາຣຸນຈື່ຈຳເອົາ ແດ່ເນີ

ເມດຕາຄອງຄຸນສິງ ຄ່າແພງພຽນລ້ານ

ພຣະອິງຊົງສອນຊີ້ ສະເໜທັມທາງປະເສີດ

ນ້ອຍໝຸ່ມລາວທຸກຖ້ວນ ສະຫງວນໄວ້ຈື່ຄວນ ແທ້ແລ້ວ.

# ລາຍຊື່ຄະນະສິດສານຸສິດຈັດທຳອະນຸສອນ

1. ພຣະ ອາຈານ ບູນສີ ວົງພູມີ ຫົວໜ້າຫ້ອງການ ເລຂາປະທານ ອ.ພ.ສ.
2. ພຣະ ອາຈານ ບຸນຈັນ ສຸທັມມະໂກສານ ເຈົ້າຄະນະເມືອງ ເມືອງ ມູນລະປາໂມກ.
3. ພຣະ ອາຈານ ບຸນສ່ວນ ພັນທະວົງ ວັດເທພະນິມິດທາດຝຸ່ນ.
4. ພຣະ ອາຈານ ບຸນປອນ ສອນສັກສິດ ວັດເທບພະນິມິດທາດຝຸ່ນ.
5. ພຣະ ອາຈານ ຄຳຜ່ອຍ ວັດຫລວງປາກເຊ.
6. ພຣະ ຊາຍຄຳ ຈຳປາອຸທຸມ.
7. ພຣະ ມະຫາບຸນທະວີວິໄລຈັກຣ໌.
8. ພຣະ ສີທອງ ປິ່ນແກ້ວ.
9. ພຣະ ບຸນສະໜອງ ສຸທັມມະໂກສານ.
10. ພຣະ ເພັດສະໝອນ ບົວຄຳ.
11. ພຣະ ສຸເມທາ ຈຳປາອຸທຸມ.
12. ພຣະ ກົງແສງ ວົງພູມີ.
13. ພຣະ ມະຫາພູສະຫວັນ ພັນທະບົວລີ.
14. ສຳມະເນນ ຊາຍສະໝຸດ ຈຳປາອຸທຸມ.

*ຄົນທີ່ສະຫລາດກວ່າຄົນສະຫລາດກໍ່ຄືຄົນທີ່ເດີນກ່ອນຄົນສະຫລາດ,*
*ກົງກັນຂ້າມ ຄົນທີ່ໂງ່ກວ່າຄົນໂງ່ ກໍ່ຄືຄົນທີ່ເດີນຕາມຫລັງຂອງຄົນໂງ່.*
*ທ່ານເດ ພ້ອມຈະເດີນກ່ອນຄົນສະຫລາດ ຫລືຕາມຫລັງຂອງຄົນໂງ່.*
*ມີແຕ່ຕົວທ່ານເອງເທົ່ານັ້ນທີ່ກຳນົດຊາຕາກຳຂອງທ່ານ.*
*ທ່ານຢ່າຫວັງລົມໆແລ້ງ ເຫມືອນໄມ້ໄຫລນ້ຳ . . .*
*ນັບວ່າເປັນຄວາມໂຊກດີຂອງທ່ານທີ່ໄດ້ເກີດມາເປັນມະນຸດ.*
*ທ່ານຈົ່ງສ້າງຄວາມດີຄວາມດັງແລະຊື່ສຽງດ້ວຍຕົວທ່ານເອງ.*
*ໂລກນີ້ຍັງເປີດໂອກາດໃຫ້ທ່ານພິສູດຢູ່ສະເໝີ ແລະ ພ້ອມແລ້ວ*
*ທີ່ຈະຈາຣຶກຊື່ຂອງທ່ານໄວ້ໃຫ້ເພື່ອນມະນຸດໄດ້ສຶກສາ ເພາະທ່ານກໍເປັນຄົນໜຶ່ງທີ່ໂລກຕ້ອງການ.*

*ພຣະ ຊາຍຄຳ ຈຳປາອຸທຸມ*

*ຄົນທີ່ເຂົາຕາບອດໝົດທັງສອງເບື້ອງນັ້ນ ເຂົາບໍ່ສາມາດຫຼຽວເບິ່ງໂລກໄດ້ ເຖິງແສງໄຟ ແສງຕາເວັນ ດວງເດືອນ ດວງດາວຈະສ່ອງສວ່າງສະໃຫວ ຂະໜາດໃດ ເຂົາກໍ່ບໍ່ສາມາດເຫັນແສງສວ່າງເໝືອນກັບຄົນຕາດີໄດ້ ສັນໃດ*

*ແຕ່ກໍ່ຍັງດີກວ່າຄົນທີ່ໃຈບອດຍ່ອມບໍ່ມີຄວາມກະຕັນຍູບໍ່ຮູ້ບໍ່ເຫັນບຸນຄຸນຂອງ ຄົນທີ່ເຄີຍຊ່ວຍເຫຼືອເກື້ອກູນມາ ເຂົາຫຼຽວບໍ່ເຫັນອັນໃດເລີຍ ເຖິງແມ່ນວ່າຈະໄດ້ຮັບ ຄວາມເມດຕາກະຣຸນາຈາກຜູ້ມີອຸປະກາຣະຄຸນ ສັນນັ້ນ.*

*ພຣະມະຫາບຸນທະວີ ວິໄລຈັກຣ໌*